*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, No. 02, 115-123*
*https://doi.org/10.69692/SUJMRD1102115*

# The Role of Tai Meuay Tales in Explaining Animals

**SOUKSADA SOUTTHIXAY*[1], Bounleuth SENGSOULIN[2]**
*Faculty of Letters, National University of Laos, Lao PDR*

**1*Correspondence:** Souksada SOUTTHIXAY, Faculty of Letters, National University of Lao Telephone: 020 56583350. Email: souksada.SOUTTHIXAY@gmail.com

***Article Info:***
***Submitted: May 14, 2025***
***Revised: June 08, 2025***
***Accepted: June 16, 2025***

**Abstract**

This article analyzes the role of *Tai Meuay* tales in explaining the names, characteristics, and behaviors of animals, based on the theoretical framework of Siraporn Na Thalang. A total of 100 tales from Phonsi Village, Khamkert District, Bolikhamxay Province were collected, analyzed, and interpreted, with textual examples provided for support. The findings were also presented through content analysis.

The study reveals that some tales explain the origins of animal names and physical characteristics—for example, the names of *Pa Pak* (carp) and *Pa Nai Kham* (golden tilapia), the striped-necked dove, the head of houseflies, the big-nosed pig, the tortoise shell, the striped tiger, buffaloes' lack of upper teeth, the twisted-neck dove, caterpillars carrying firewood, lazy bugs, bent-backed shrimp, and the origin of monkeys.

Other tales focus on animal behaviors, including the cries of frogs and owls, the blood-feeding of bed bugs, the crocodile's open mouth, monkeys' inability to enter water, ducks eating bran, pigs eating feces, dogs avoiding buffalo feces bugs, fish living in water, tortoises living on both land and water, crocodiles' inability to climb trees, tigers' fear of toads, enmity between cats and dogs, rivalry between grasshoppers and finches, and the refusal of squirrels and chipmunks to enter water.

**Keywords:** roles, tales, Tai Meauy

## 1. ພາກສະເໜີ

ວັນນະຄະດີມີບົດບາດຄວາມສຳຄັນຕໍ່ສັງຄົມໃນຫຼາຍໆດ້ານ ເປັນຕົ້ນແມ່ນ ພາໃຫ້ເກີດຄວາມຈະເລີນແກ່ຜູ້ໜຸ່ມ, ໃຫ້ຄວາມຊື່ນບານແກ່ຜູ້ເຖົ້າ, ເປັນອາພອນໃຫ້ຄົນຮັ່ງມີ, ເປັນຢາແກ້ທຸກໃນຍາມໂສກເສົ້າ, ເປັນຄວາມມ່ວນຊື່ນໃນຄອບຄົວ, ບໍ່ຄຽດຊັງໃນຕ່າງຖິ່ນ, ບໍ່ຖິ້ມປະລະເລີຍເຮົາທັງກາງຄືນ ແລະ ກາງເວັນລວມທັງຍາມເດີນທາງ ແລະ ຍາມຢຸດພັກ (Vivlavong, 1996; Vongdala & Teagle, 1987). ທຸກຊົນເຜົ່າໃນໂລກກໍຄືໃນລາວເຮົາລ້ວນແຕ່ມີວັນນະຄະດີເປັນຂອງຕົນເອງ (ເປັນຕົ້ນແມ່ນວັນນະຄະດີພື້ນເມືອງ). ສິ່ງດັ່ງກ່າວເປັນສິ່ງຢັ້ງຢືນວ່າ ວັນນະຄະດີກຳເນີດເກີດຂຶ້ນ ແລະ ຍືນຍົງຄົງຕົວກັບມະນຸດກໍຍ້ອນຄວາມຮຽກຮ້ອງຕ້ອງການຂອງມະນຸດໃນຫຼາຍໆດ້າ ນເຊັ່ນ ດ້ານການອອກແຮງງານ, ດ້ານການສະໜອງຂໍ້ມູນ, ບົດຮຽນ, ປະສົບການໃຫ້ແກ່ມະນຸດກໍຄືຄວາມຕ້ອງການດ້ານການສຶກສາອົບຮົມ ແລະ ຄວາມບັນເທີງຂອງມະນຸດ (Wannaudorn et al., 2024) and . ບົດວັນນະຄະດີຕ່າງໆ ນອກຈາກມີເນື້ອໃນອັນອຸດົມສົມແລ້ວ ຍັງເປັນຄັງສາຂອງສັບພາສາອີກດ້ວຍ ເພາະວ່າໃນບົດວັນນະຄະດີຜູ້ປະດິດຄິດແຕ່ງໄດ້ເລືອກເຟັ້ນໃຊ້ຖ້ອຍຄຳສຳນວນອັດຖະລົດທີ່ມີຄວາມມ່ວນອອນຊອນ ເມື່ອໄດ້ຍິນໄດ້ຟັງແລ້ວກໍສາມາດສຳນຶກເຫັນພາບຕ່າງໆໄດ້ ເປັນຕົ້ນແມ່ນ ຮູ້ເຖິງການໃຊ້ພາສາຂອງນັກຂຽນທີ່ພັນລະນາເຖິງຄວາມຮັກທີ່ມີຫຼາກຫຼາຍລັກຊາດ ຄື ລົດຄວາມຮັກລະຫວ່າງສະມາຊິກໃນຄອບຄົວ, ຄວາມຮັກລະຫວ່າງໝູ່ເພື່ອນ, ລົດຄວາມຮັກລະຫວ່າງໜຸ່ມສາວເປັນຕົ້ນ (Syvongsak et al.,2021).

ໄຕເມີ້ຍມີວັນນະຄະດີພື້ນເມືອງ ທີ່ໄດ້ປະດິດແຕ່ງ ແລະ ເລົ່າປາກຕໍ່ປາກສືບກັນມາຫຼາຍເລື່ອງ ແຕ່ລະເລື່ອງລ້ວນປະດິດແຕ່ງຂຶ້ນມາເພື່ອຮັບໃຊ້ສັງຄົມຂອງຕົນເອງເປັນຕົ້ນວ່າ ເນື້ອໃນສ່ອງແສງເຖິງການຕໍ່ສູ້ຕ້ານໄພທຳມະຊາດ, ອະທິບາຍປາກົດການທຳມະຊາດ ສ່ອງແສງທາງດ້ານແນວຄິດຈິດໃຈ ເຊັ່ນ ຄວາມເຊື່ອຖື ແລະ ຮີດຄອງປະເພນີ, ການເຮັດບຸນສິນກິນທານ, ທັດສະນະຄຸນສົມບັດ, ຍ້ອງຍໍສັນລະເສີນຄວາມສະຫຼາດພິບໄຫວ, ການຕຳໜິຕິຕຽນການກະທຳທີ່ຜິດພາດ, ນ້ຳໃຈຊື່ສັດບໍລິສຸດຂອງປະຊາຊຊາວໄຕເມີ້ຍ (Southixay, 2019). ນອກນັ້ນກໍຍັງປະດິດແຕ່ງຂຶ້ນເພື່ອສ້າງຄວາມມ່ວນຊື່ນ ແລະ ໃຫ້ຄະຕິສັ່ງສອນຄົນໃນສັງຄົມໃຫ້ດຳລົງຊີວິດໃນສັງຄົມໄປໃນທາງທີ່ຖືກຕ້ອງປອງດອງກັນ. ໃນສະໄໝບູຮານໄຕເມີ້ຍສ່ວນຫຼາຍຍ່ອມບໍ່ຮູ້ໜັງສື, ເລື່ອງເລົ່າຕ່າງໆ ທີ່ຄວນຈົດຈຳໄວ້ ຫຼື ຕ້ອງການຈະສືບທອດແກ່ຄົນຮຸ່ນຫຼັງກໍໃຊວິທີຈື່ຈຳ ແລະ ເລົ່າສືບຕໍ່ກັນເລື້ອຍໆມາ (Thongsonsai and Khana, 2001). ນິທານໄຕເມີ້ຍຖືເປັນບົດວັນນະຄະດີທີ່ມີຄວາມໝາຍຕໍ່ວິຖີຊີວິດຂອງໄຕເມີ້ຍທັງທາງກົງ ແລະ ທາງອ້ອມ. ນິທານເຮັດໜ້າທີ່ເໝືອນແວ່ນສະທ້ອນເງົາພາບສັງຄົມ ແລະ ວັດທະນະທຳໃນດ້ານຕ່າງໆ ເພາະວ່ານິທານໄຕເມີ້ຍເປັນນິທານທີ່ສ້າງ ແລະ ສືບສານໂດຍປະຊາຊົນໄຕເມີ້ຍຕັ້ງແຕ່ຍຸກອະດີດຕະການ ພາບສັງຄົມທີ່ປາກົດໃນນິທານຈຶ່ງ

ເປັນສັງຄົມທີ່ໃກ້ກັບວິຖີຊີວິດຂອງປະຊາຊົນໃນອະດີດ ສະແດງລັກສະນະຂອງຊຸມຊົນຂະໜາດນ້ອຍທີ່ມີຊີວິດຄວາມເປັນຢູ່ແບບຮຽບງ່າຍດັ້ງເດີມ. ອາດກ່າວໄດ້ວ່າ ນິທານໄຕເມີ້ຍມີຄວາມສຳພັນກັບວັດທະນະທຳ, ຮີດຄອງປະເພນີຂອງເຜົ່າມາແຕ່ບູຮານ ເພາະບໍ່ພຽງແຕ່ຈະໃຫ້ຄວາມບັນເທີງເທົ່ານັ້ນ ຫາກຍັງສະທ້ອນບົດບາດ ແລະ ໜ້າທີ່ສຳຄັນຕໍ່ວິຖີຊີວິດຂອງເຜົ່າເມີ້ຍຫຼາຍປະການ (Southixay, 2020).

ນິທານມີບົດບາດໜ້າທີ່ສຳຄັນຕໍ່ກັບສັງຄົມລາວໃນປັດຈຸບັນ ເພາະວ່ານິທານຕ່າງໆນັ້ນມີ ບົດບາດໜ້າທີໃນການອະທິບາຍເຫດກຳເນີດຂອງກຸ່ມຊົນຕ່າງ ລວມທັງການອະທິບາຍການກຳເນີດຂອງສັບພະສິ່ງຕ່າງໆຢູ່ເທິງໜ້າໂລກ, ອະທິບາຍໃຫ້ຮັບຮູ້ເຖິງປະຫວັດຄວາມເປັນມາຂອງທ້ອງຖິ່ນຕ່າງໆ, ນິທານມີບົດບາດໜ້າທີ່ໃນການສຶກສາອົບຮົມລະບຽບຂອງສັງຄົມໃຫ້ຢູ່ຮ່ວມກັນດ້ວຍຄວາມຖືກຕ້ອງປອງດອງກັນ, ພ້ອມທັງເປັນການຫາທາງອອກໃຫ້ກັບຄວາມຄັບຂ້ອງໃຈຂອງບຸກຄົນອັນເກີດຈາກຄວາມຂັດແຍ້ງ ແລະ ກົດເກນທາງສັງຄົມຕ່າງໆ. ນອກຈາກນີ້ນິທານຍັງມີບົດບາດໜ້າທີ່ໃນການຖ່າຍທອດຄວາມເຊື່ອ ປະເພນີ, ພິທີກຳ ແລະ ມີບົດບາດໜ້າທີໃນສະແດງອັດຕະລັກທາງເຜົ່າພັນຕ່າງໆທີ່ຢູ່ໃນສັງຄົມເພື່ອໃຫ້ເຫັນເຖິງຈຸດພິເສດ ແລະ ຄວາມເປັນເອກະລັກຕ່າງໆ (Sangkhaphanthanon, 2009). ນິທານມີບົດບາດໜ້າທີ່ຢູ່ບົນພື້ນຖານຂອງຊີວະວິທະຍາ ແລະ ຈິດຕະວິທະຍາ ເຊິ່ງເອີ້ນໄດ້ວ່າ ເປັນທິດສະດີຈິດຕະວິທະຍາທີ່ໃຫ້ຄວາມສຳຄັນກັບການສຶກສາຕໍ່ກຸ່ມຄົນ ແລະ ບໍ່ເນັ້ນຄວາມສຳຄັນຂອງລະບົບສັງຄົມວ່າມີເຫດຜົນຂອງການຄົງຢູ່ໃນເບື້ອງຫຼັງຂອງຄວາມເປັນຊົນເຜົ່າ. (Malinowski, 1954) ໃນການສຶກສາກ່ຽວກັບນິທານຕ່າງໆຕ້ອງສຶກສາອົງປະກອບຂອງການເຮັດໜ້າທີ່ທາງສັງຄົມບໍ່ວ່າຈະເປັນໜ້າທີ່ທີ່ມີການປ່ຽນແປງ ແລະ ໜ້າທີ່ທີ່ຄົງທີ່ເຮົາຄວນໃຫ້ຄວາມສົນໃຈໃນບໍລິບົດສັງຄົມຂອງນິທານ, ສະນັ້ນການສຶກສານິທານຕ້ອງຫັນມາສົນໃຈບົດບາດໜ້າທີ່ຂອງນິທານທີ່ມີຕໍ່ສັງຄົມ. William (1965) ພ້ອມທັງເນັ້ນຄວາມສຳຄັນທີ່ເນັ້ນຄວາມສຳພັນລະຫວ່າງນິທານຕ່າງໆກັບສັງຄົມ ເພື່ອໃຫ້ເຫັນບົດບາດໜ້າທີ່ຂອງນິທານ (Thompson, 1953). ນິທານພື້ນເມືອງຕ່າງໆມີບົດບາດໜ້າທີ່ພົວພັນກັບສັງຄົມ ໂດຍສະເພາະແມ່ນນິທານສັດເຊິ່ງຕົວລະຄອນເອກແມ່ນພັນລະນາເຖິງການເຄື່ອນໄຫວ, ການປະພຶດ ແລະ ອະທິບາຍເຖິງແນວຄິດຈິດໃຈຂອງຕົວລະຄອນເປັນສັດ ແຕ່ຈຸດປະສົງແມ່ນຢາກສັ່ງສອນມະນຸດ ດັ່ງເຊັ່ນຕົວລະຄອນການພັນລະນາເຖິງຕົວລະຄອນໝາ ໃນຕຳນານ ແລະ ພິທີກຳເຫັນວ່າຕົວລະຄອນໝາບົດບາດສຳຄັນ 4 ປະການ ຄື ໝາເປັນບັນພະບຸລຸດຂອງມະນຸດ, ເປັນຜູ້ນຳທາງວັດທະນະທຳ, ເປັນຕົວແທນຂອງການສືບເຜົ່າພັນ , ຄວາມອຸດົມສົມບູນ ແລະ ເປັນສື່ກາງເຊື່ອມຍົງລະຫວ່າງໂລກມະນຸດກັບສິ່ງສັກສິດ ( Hongsuwan, 2007). ຍ້ອນເຫັນໄດ້ເຖິງບົດບາດໜ້າທີ່ຄວາມສຳຄັນຂອງນິທານຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈຢາກສຶກສາບົດບາດໜ້າທີ່ນິທານໄຕເມີ້ຍໃນການອະທິບາຍກ່ຽວກັບສັດ ເຊິ່ງມີຈຸດປະສົງສຶກສາ ບົດບາດໜ້າທີ່ ທີ່ມາຂອງຊື່ ແລະ ພຶດຕິກຳຂອງສັດ.

## 2. ອຸປະກອນ ແລະ ວິທີການ

2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນ ແລະ ກຸ່ມຕົວຢ່າງ ຜູ້ໃຫ້ຂໍ້ມູນ ຜູ້ຄົ້ນຄວ້າໄດ້ຄັດເລືອກຜູ້ເລົ່ານິທານຈາກນັກເລົ່ານິທານຈາກບ້ານ ບ້ານໂພນສີ ເມືອງຄຳເກີດ ແຂວງບໍລິຄຳໄຊ. ຈຳນວນ 3 ທ່ານ ເຊິ່ງປະກອບມີ ປ້າ ສົມໄຂ ເພຍມະວົງ, ລຸງ ສີວົງ ສຸດທິໄຊ, ລຸງ ອ່ອນສີ ແລະ ລຸງ ອ່ອນສີ ຄຳທະບຸນ ທັງ 3 ທ່ານນີ້ມີປະສົບການກ່ຽວກັບການເລົ່ານິທານຕ່າງໆມາຕັ້ງແຕ່ຍາມຍັງໜຸ່ມ ເຊິ່ງເປັນຜູ້ທີ່ມີບົດບາດໃນຊຸມຊົນຄືເປັນໝໍພອນ, ໝໍເຊີປະຈຳ ແລະ ນັກໝໍລຳປະຈຳບ້ານ ເຊິ່ງມີຮູ້ທາງດ້ານວັນນະຄະດີເປັນຢ່າງດີ. ເກນໃນການຄັດເລືອກແມ່ນບໍ່ໄດ້ໃຊ້ສູດຫຍັງເຂົ້າມາຄັດເລືອກເນື່ອງຈາກວ່າເປັນການສຶກສາທາງດ້ານຄຸນນະພາບ. ສະນັ້ນການຄັດເລືອກເອົານັກເລົ່ານິທານແມ່ນຄັດເອົາຜູ້ທີ່ເປັນເຜົ່າໄຕເມີ້ຍໃຊ້ພາສາເມີ້ຍ ແລະ ມີຄວາມຮັບຮູ້ທາງດ້ານພາສາວັນນະຄະດີ, ສາມາດຈື່ຈຳ ແລະ ເລົ່າເລື່ອງໄດ້ຢ່າງລະອຽດ. ມີອາຍຸຕັ້ງແຕ່ 50 ປີຂຶ້ນໄປ, ບໍ່ຈຳກັດເພດການສຶກສາ ແລະ ອາຊີບ; ຜູ້ເລົ່ານິທານຈຳນວນ 3 ທ່ານ ນີ້ແມ່ນເປັນຄົນເກົ່າແກ່ຂອງບ້ານນັ້ນໆຢ່າງແທ້ຈິງ, ອາໄສຢູ່ນັ້ນໆມາແຕ່ກຳເນີດໂດຍບໍ່ໄດ້ຍົກຍ້າຍໄປບ່ອນອື່ນ ແລະ ບໍ່ໄດ້ຍົກຍ້າຍມາແຕ່ບ່ອນອື່ນ. ທາງດ້ານພາສາ ແລະ ວັນນະຄະດີບໍ່ໄດ້ຮັບອິດທິພົນຈາກບ່ອນອື່ນ ເພາະຜູ້ໃຫ້ຂໍ້ມູນທັງ 3 ທ່ານ ທີ່ໄດ້ເລືອກລ້ວນແຕ່ແມ່ນຄົນດັ້ງເດີມຂອງທ້ອງຖິ່ນນັ້ນແທ້ໆ. ບ້ານ ດັ່ງກ່າວນັ້ນ, ເປັນບ້ານທີ່ເກົ່າແກ່ຂອງເມືອງຄຳເກີດ ແລະ ປະຊາຊົນໃນບ້ານນັ້ນກໍແມ່ນໄຕເມີ້ຍເປັນສ່ວນຫຼາຍ. ການໂອ້ລົມສົນທະນາຂອງກຸ່ມໄຕເມີ້ຍ ແມ່ນໃຊ້ພາສາດັ້ງເດີມຂອງເຜົ່າ. ອີກປະການໜຶ່ງສັງເກດເຫັນວ່າ ປະຊາຊົນຍັງຮັກສາວັນນະຄະດີຂອງຕົນໂດຍສະເພາະແມ່ນບັນດາຕຳນານ, ເລື່ອງເລົ່າ ແລະ ນິທານຕ່າງໆ ເຊິ່ງສະແດງອອກໃນການດຳລົງຊີວິດປະຈຳວັນຂອງເຂົາເຈົ້າ ເຊັ່ນ ຍາມມີບຸນມີງານທາງປະເພນີຊີວິດ ຫຼື ວັນສິນ ຜູ້ເຖົ້າຜູ້ແກ່ພາຍໃນບ້ານຍັງເລົ່ານິທານຕຳນານໃຫ້ລູກຫຼານຟັງເປັນປະຈຳ. ບັນດາປະເພນີທີ່ສະທ້ອນຢູ່ໃນນິທານເລື່ອງເລົ່າຕຳນານເຫຼົ່ານັ້ນກໍເຫັນວ່າປະຊາຊົນຍັງຄົງປະຕິບັດຢູ່. ດັ່ງນັ້ນ, ຜູ້ຄົ້ນຄວ້າຈຶ່ງເຫັນວ່າມີຄວາມເໝາະສົມກັບການເກັບກຳຮວບຮວມວັນນະຄະດີທ້ອງຖິ່ນໄຕເມີ້ຍໄວ້.

ປະຊາກອນ ແລະ ກຸ່ມຕົວຢ່າງ ທີ່ເປັນນິທານທີ່ນຳມາສຶກສາແມ່ນນິທານໄຕເມີ້ຍ 30 ບົດເລື່ອງ ເຫດຜົນທີ່ກຳນົດເອົານິທານ 30 ເລື່ອງແມ່ນເນື່ອງຈາກວ່າຜູ້ໃຫ້ຂໍ້ມູນ 2 ທ່ານ ໃນຈຳນວນຜູ້ເລົ່ານິທານຮັບຮູ້ ຫຼື ເລົ່າເລື່ອງນັ້ນໆ. ແລ້ວຄັດເອົານິທານທີ່ສ່ອງແສງໃຫ້ເຫັນເຖິງບົດບາດໜ້າທີ່ໃນການອະທິບາຍກ່ຽວກັບສັດມາໄດ້ຈຳນວນ 13 ເລື່ອງ ເພື່ອມາເປັນປະຊາກອນຕົວຢ່າງໃນການວິເຄາະ.

2.2 ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນ ໃຊ້ແບບສຳພາດດ້ວຍການຕັ້ງຄຳຖາມສົນທະນາແລ້ວໃຫ້ຜູ້ໃຫ້ຂໍ້ມູນເລົ່ານິທານແລ້ວຜູ້ຄົ້ນຄວ້າໄດ້ບັນບັນທຶກຄຳບອກເລົ່າຂອງຜູ້ໃຫ້ຂໍ້ມູນ. ຄຳຖາມໃນເບື້ອງຕົ້ນທີ່ຜູ້ເກັບຂໍ້ມູນໄດ້ສ້າງໄວ້ຄື:

- ທ່ານຈື່ນິທານເລື່ອງໃດແດ່ ກະລຸນາເລົ່າໃຫ້ຟັງແດ່?
- ທ່ານຈື່ນິທານສັດເລື່ອງໃດແດ່ ກະລຸນາເລົ່າໃຫ້ຟັງແດ່?
- ນິທານເລື່ອງທີ່ເລົ່າມານີ້ສອນໃຫ້ເຮົາຮູ້ຫຍັງແດ່?

ອຸປະກອນທີ່ໃຊ້ໃນການບັນທຶກຂໍ້ມູນຈາກນັກເລົ່ານິທານປະກອບມີ: ເຄື່ອງບັນທຶກສຽງ, ປຶ້ມບັນທຶກສຽງ, ປຶ້ມຂຽນ, ອຸປະກອນການຂຽນ, ກ້ອງຖ່າຍຮູບ, ໂທລະສັບ ແລະ ຄອມພິວເຕີ.

2.3 ວິທີການເກັບກຳຂໍ້ມູນ

ວິທີການເກັບກຳຂໍ້ມູນໃນການຄົ້ນຄວ້າຄັ້ງນີ້ຂັ້ນຕອນຄື

ຂັ້ນຕອນ ທີ 1 ການເກັບກຳຂໍ້ມູນທາງດ້ານເອກະສານ: ຄົ້ນຄວ້າສຳຫຼວດໜັງສື, ບົດວິທະຍານິພົນ ແລະ ບົດຄົ້ນຄວ້າຕາມເອກະສານຕ່າງໆທັງເປັນພາສາລາວ, ໄທ ແລະ ອັງກິດ ທີ່ກ່ຽວຂ້ອງກັບບົດຄົ້ນຄວ້າ ເພື່ອມາເປັນແນວທາງໃນການສຶກສາຄົ້ນຄວ້າປະກອບໃສ່ບົດ ແລະ ສ້າງຄຳຖາມເພື່ອສຳພາດຂໍ້ມູນນຳຜູ້ໃຫ້ຂໍ້ມູນ ເຊິ່ງຄຳຖາມດັ່ງກ່າວນັ້ນໄດ້ຜ່ານ ຊ່ຽວຊານກວດສອບຄຸນນະພາບເຄື່ອງມືຂອງນັກສຶກສາລະດັບປະລິນຍາເອກ ສາຂາພາສາວັດທະນະທຳລາວ ຮຸ່ນທີ 1 ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ ໂດຍມີຄະນະກຳມະການ 3 ທ່ານ ຄື ສຈ. ປອ ບົວລະພາພັນ, ສຈ.ປອ ເຈມ ແຊ້ມເບີເລນ ແລະ ຮສ. ປອ ນາທານ ບາເດີນັອກ.

ຂັ້ນຕອນ ທີ 2 ການເກັບກຳຈາກການສຳຫຼວດພື້ນທີ່: ຂຽນໜັງສືສະເໜີ ຂໍອະນຸຍາດຈາກຄະນະອັກສອນສາດ ເພື່ອລົງເກັບກຳຂໍ້ມູນພາກສະໜາມຢູ່ບ້ານໂພນສີ ເມືອງຄຳເກີດ ແຂວງບໍລິຄຳໄຊ ແລ້ວຈຶ່ງເອົາໃບອະນຸຍາດໄປສະເໜີຕໍ່ອຳນາດການປົກ ຄອງບ້ານໂພນສີ ເມືອງຄຳເກີດ ແຂວງບໍລິຄຳໄຊ. ເມື່ອໄດ້ໜັງສືອະນຸຍາດເຂົ້າພື້ນທີ່ເພື່ອເກັບກຳຂໍ້ມູນແລ້ວ ກໍໄດ້ດຳເນີນການເກັບຂໍ້ມູນໃນເບື້ອງຕົ້ນເຊິ່ງໃຊ້ວິທີແບບສຳພາດເຈາະເອົາຂໍ້ມູນຈາກຜູ້ໃຫ້ຂໍ້ມູນ. ໄລຍະເວລາໃນການເກັບກຳຂໍ້ມູນແມ່ນ ໄລຍະເວລາລົງເກັບກຳນິທານຕົວຈິງແມ່ນໃຊ້ເວລາ 3 ວັນ. ສຳພາດນຳນັກເລົ່ານິທານ ທ່ານລະ 1 ວັນ.

ຂັ້ນຕອນທີ 3 ພາຍຫຼັງສຳພາດຂໍ້ມູນທີ່ເປັນນິທານຈາກນັກເລົ່ານິທານແລ້ວ, ຜູ້ຄົ້ນຄວ້າໄດ້ຮຽບຮຽງນິທານຈຳນວນ 30 ເລື່ອງ ແລ້ວຄັດເລືອກເອົາ 13 ເລື່ອງ ເພື່ອມາວິເຄາະ. ການຄັດເລືອກແມ່ນບໍ່ໄດ້ນຳໃຊ້ສູດ ຫຼື ເກນ ເນື່ອງຈາກວ່າເປັນການວິເຄາະດ້ານຄຸນນະພາບ. ສະນັ້ນຈຶ່ງອີງໃສ່ຄວາມອຸດົມສົມບູນຂອງເນື້ອໃນທີ່ສ່ອງແສງເຖິງບົດບາດນິທານໃນການອະທິບາບກ່ຽວກັບສັດ ເຊິ່ງສາມາດຕອບສະໜອງບັນຫາໃນການຄົ້ນຄວ້າຄັ້ງນີ້.

2.4 ການວິເຄາະຂໍ້ມູນ

ຂໍ້ມູນທີ່ໄດ້ຈາກການສຳພາດໂດຍໃຫ້ນັກເລົ່ານິທານໃຫ້ຂໍ້ມູນແມ່ນນິທານຈຳນວນ 30 ເລື່ອງ. ນິທານ 30 ເລື່ອງນີ້ ແມ່ນ 2 ທ່ານໃນຈຳນວນຜູ້ເລົ່ານິທານຮັບຮູ້ ແລະ ນຳນິທານນັ້ນເລົ່າ, ແຕ່ໃນການເລົ່າລາຍລະອຽດຂອງຖ້ອຍຄຳສຳນວນບໍ່ຄືກັນ ແຕ່ເນື້ອໃນສ່ອງແສງແມ່ນອັນດຽວກັນ, ດັ່ງນັ້ນຜູ້ຄົ້ນຄວ້າຈຶ່ງໄດ້ຄັດເລືອກເອົາເປັນຖານຂໍ້ມູນ. ຫຼັງຈາກນັ້ນ, ຜູ້ຄົ້ນຄວ້າໄດ້ນຳຂໍ້ມູນມາຮຽບຮຽງຕາມຄວາມບອກເລົ່າຂອງຜູ້ໃຫ້ຂໍ້ມູນ ແລ້ວນຳຂໍ້ມູນດັ່ງກ່າວນັ້ນມາວິເຄາະບົດບາດໜ້າທີ່ນິທານໃນການອະທິບາຍທີ່ມາຂອງສັດ ໂດຍອີງໃສ່ແນວຄິດທິດສະດີຂອງ William (1965) ທີ່ໄດ້ຈຳແນກບົດບາດໜ້າທີ່ຂອງຄະຕິຊົນວ່າມີ 4 ປະການ ຄື ຄະຕິຊົນເປັນທາງອອກສຳລັບຄວາມຂັດແຍ້ງ ແລະກົດເກນທາງສັງຄົມ, ຄະຕິຊົນໃຫ້ການສຶກສາອົບຮົມລະບຽບຂອງສັງຄົມ, ຄະຕິຊົນກັບການຖ່າຍທອດຄວາມເຊື່ອ ແລະ ພິທີກຳ, ຄະຕິຊົນກັບການສ້າງເອກະລັກ ແລະ ປະຫວັດສາດທ້ອງຖິ່ນ. ແລະ ອີງໃສ່ແນວຄິດທິດສະດີຂອງ NaThalang (2000) ໄດ້ສະເໜີບົດບາດໜ້າທີ່ຂອງຄະຕິຊົນເປັນ 3 ປະການ ຄື ບົດບາດຄະຕິຊົນໃນການອະທິບາຍກຳເນີດ ແລະ ອັດຕະລັກຂອງກຸ່ມຊົນ ແລະ ພິທີກຳ, ບົດບາດຄະຕິຊົນໃນການໃຫ້ການສຶກສາອົບຮົມລະບຽບສັງຄົມ ແລະ ຮັກສາມາດຖານພຶດຕິກຳທາງສັງຄົມ ແລະ ບົດບາດຄະຕິຊົນໃນການເປັນທາງອອກໃຫ້ກັບຄັບຂ້ອງໃຈຂອງບຸກຄົນອັນເກີດຈາກກົດເກນທາງສັງຄົມ. ເມື່ອອີງໃສ່ແນວຄິດທິດສະດີດັ່ງກ່າວນີ້ NaThalang (2004) ໄດ້ນຳມາເອົາບົດບາດຄະຕິຊົນໃນການອະທິບາຍກຳເນີດ ຂອງສັດ, ອະທິບາຍທີ່ມາຂອງສັດ ແລະ ພຶດຕິກຳຂອງສັດບາງຊະນິດທີ່ທີ່ມີລັກສະນະແຕກຕ່າງຈາກສັດຊະນິດອື່ນ. ເຊັ່ນດຽວໃນທິດສະດີດັ່ງກ່າວໄດ້ອະທິບາຍກ່ຽວກັບການກຳເນີດຄົນ ແລະ ສະນະຕ່າງໆຂອງຄົນ.

## 3. ຜົນໄດ້ຮັບ

ຜົນໄດ້ຮັບຂໍ້ມູນຈາກການສຳພາດຕາມຄຳບອກເລົ່າຂອງຜູ້ໃຫ້ຂໍ້ມູນທັງ 3 ທ່ານ ແມ່ນນິທານ ຈຳນວນນິທານ 30 ເລື່ອງ. ເມື່ອໄດ້ນິທານແລ້ວຜູ້ຄົ້ນຄວ້າໄດ້ຮິບໂຮມຮຽບຮຽງນິທານ ທັງ 30 ເລື່ອງ ແລ້ວຈຶ່ງວິເຄາະຜ່ານການວິເຄາະຈຶ່ງຮູ້ວ່າໃນຈຳນວນນິທານດັ່ງກ່າວນັ້ນມີນິທານທີ່ກົງກັບຈຸດປະສົງຂອງການຄົ້ນຄວ້າ ຈຳນວນ 13 ເລື່ອງ. ດັ່ງນັ້ນຜູ້ຄົ້ນຄວ້າຈຶ່ງໄດ້ນຳນິທານທີ່ຖືກຄັດເລືອກນັ້ນມາວິເຄາະບົດບາດໜ້າທີ່ນິທານທານໃນການອະທິບາຍກ່ຽວກັບສັດ ໂດຍອີງຕາມແນວຄິດທິດສະດີທີ່ກ່າວໄວ້ໃນເບື້ອງຕົ້ນ. ຜົນໄດ້ຮັບຈາກຖານຂໍ້ມູນທີ່ໄດ້ກ່າວເຖິງບົດບາດໜ້າທີ່ນິທານໃນການອະທິບາຍກ່ຽວກັບສັດເຫັນໄດ້ວ່າ ນິທານໃນການໄຂຂໍ້ຂອງໃຈກ່ຽວສັດບາງຈຳພວກຈະມີລັກສະນະທີ່ແປກ ແລະ ບໍ່ຄືໃຜ ເຊັ່ນວ່າ ໝູຈະດັງເອີ່, ແມງວັນມີຫົວແບ່ງເຄິ່ງ, ປາມີຫຼາຍສີ, ລັກສະນະສຽງຮ້ອງຂອງສັດບາງຊະນິດ ແລະ ພຶດຕິກຳຕ່າງຂອງສັດ. ດ້ວຍຈຸດພິເສດດັ່ງກ່າວເຮັດໃຫ້ເປັນທີ່ສົນໃຈຂອງຄົນໃນສະໄໝບູຮານ. ດັ່ງນັ້ນຄົນບູຮານຈຶ່ງໄດ້ອະທິບາຍລັກສະນະຂອງສັດແຕກຕ່າງກັນໄປ. ໃນນິທານໄຕເມີ້ຍກໍໄດ້ພົບ ນິທານອະທິບາຍເຫດກ່ຽວກັບຊື່, ລັກສະນະຂອງສັດ ແລະ ພຶດຕິກຳຂອງສັດບາງຊະນິດ. ດັ່ງລາຍລະອຽດລຸ່ມນີ້:

### 3.1 ທີ່ມາຂອງຊື່ເອີ້ນ

ຊື່ເອີ້ນຂອງສັດບາງຊະນິດ ແມ່ນການໃຊ້ນິທານເປັນສື່ໃນການອະທິບາຍເຖິງເຄົ້າກຳເນີດດັ່ງກ່າວ ເພື່ອເປັນການໄຂຂໍ້ຂ້ອງໃຈ ແລະ ໄຂປົດສະໜາຕ່າງໆຂອງຊາວໄຕເມີ້ຍບູຮານ ເຊັ່ນ

#### 1) ຊື່ເອີ້ນປາປາກ

ປາປາກແມ່ນປາຊະນິດໜຶ່ງທີ່ມີລັກສະນະພິເສດແຕ່ກຕ່າງຈາກປາປະເພດອື່ນຄືມີຮອຍບາດຢູ່ປາກ ຊາວໄຕເມີ້ຍໄດ້ພະຍາຍາມອະທິບາຍລັກສະນະພິເສດດ້ວຍການສັງເກດຕາມທີ່ເຂົາເຈົ້າພົບເຫັນ. ຈາກການສຶກສາບົດບາດໜ້າທີ່ນິທານໄຕເມີ້ຍໃນການອະທິບາຍເຫດກ່ຽວກັບສັດ ພົບນິທານອະທິບາຍຊື່ເອີ້ນປາປາກ ດັ່ງສະແດງອອກໃນນິທານ “ສັດມະນຸດຜູ້ມີປັນຍາ” ເລົ່າວ່າ: ສັດມະນູດທັງຫຼາຍໄດ້ຂຶ້ນໄປປະຊຸມຢູ່ເມືອງຟ້າ ແລະໄດ້ເວົ້າເຖິງຄວາມຂັດແຍ້ງລະຫວ່າງມະນຸດກັບສັດຕ່າງໆ ເພາະມະນຸດລ່າສັດກິນເປັນອາຫານບໍ່ມີມື້ຢຸດເຊົາ. ສັດມະນຸດກໍໂຕ້ຖຽງບໍ່ເປັນອັນສິ້ນສຸດຈັກເທື່ອ ຕັ້ງແຕ່ເຊົ້າຈົນທ່ຽງ. ເມື່ອເຖິງເວລາກິນເຂົ້າມະນຸດກໍນຳປາປີ້ງອອກມາກິນ ແລ້ວກໍເອີ້ນໃຫ້ພະຍາແຖນມາກິນນຳ ພໍພະຍາແຖນໄດ້ຊີມປາປີ້ງກໍເວົ້າວ່າ “ໂອ້ ຊີ້ນປາແຊບແນວນີ້ເອງສົມພໍມະນຸດຈຶ່ງມັກກິນ” ເວລານັ້ນບັນດາປາທັງຫຼາຍໄດ້ຍິນ ກໍໂດດເຮືອນ, ໂດດຊານໜີຈາກກອງປະຊຸມນັ້ນທັນທີ ມີປາໂຕໜຶ່ງໄດ້ແລ່ນໄປຕຳເອົາສ້ວມນອນຂອງພະຍາແຖນຈົນຫົວກະບາກອອກ, ມະນຸດເຮົາຈຶ່ງເອີ້ນວ່າ ປາກະບາກ ຫຼື ປາປາກ.

ຈາກເນື້ອໃນຂ້າງເທິງສະແດງໃຫ້ເຫັນວ່າ ປາກແມ່ນປາທີ່ມີຮອຍຢູ່ປາກ ເຊິ່ງໄດ້ມາຈາກການຕຳສ້ວມນອນຂອງພະແຖນຍ້ອນວ່າປາຕົກໃຈຢ້ານພະອິນ ແລະ ສັດອື່ນໆຈະກິນຕົນເປັນອາຫານ. ນອກຈາກນີ້, ຍັງສະແດງໃຫ້ເຫັນຄວາມອຸດົມສົມບູນຂອງທຳມະຊາດຄືສັດປານາໆພັນ ເປັນຕົ້ນແມ່ນປາທີ່ຊາວໄຕເມີ້ຍມັກນຳມາແຕ່ງເປັນອາຫານ ພ້ອມທັງຮູ້ວິທີປຸງແຕ່ງປາໃຫ້ລົດຊາດ ແລະ ມີກິ່ນຫອມ.

#### 2) ຊື່ເອີ້ນປາໄນຄຳ

ປາໄນຄຳແມ່ນປາຊະນິດໜຶ່ງທີ່ມີລັກສະນະພິເສດແຕ່ກຕ່າງຈາກປາປະເພດອື່ນຄືຕົນໂຕເປັນສີເຫຼືອງ. ຊາວໄຕເມີ້ຍໄດ້ພະຍາຍາມອະທິບາຍລັກສະນະພິເສດດ້ວຍການສັງເກດຕາມທີ່ເຂົາເຈົ້າພົບເຫັນ. ຈາກການສຶກສາບົດບາດໜ້າທີ່ນິທານໄຕເມີ້ຍໃນການອະທິບາຍເຫດກ່ຽວກັບສັດ ພົບນິທານອະທິບາຍຊື່ເອີ້ນປາໄນຄຳ ດັ່ງສະແດງອອກໃນນິທານ “ທ້າວຂີ້ຄ້ານ” ເລົ່າວ່າ: ມີທ້າວຂີ້ຄ້ານຄົນໜຶ່ງ ທີ່ໄດ້ລ້ຽງໝາ ແລະແມວເປັນເພື່ອນ. ມື້ໜຶ່ງໄດ້ລູກສາວພະຍານາກມາຫຼິ້ນຢູ່ຄອກຄວາຍ ຈຶ່ງຖືກໝາແມວໄລ່ກັດ. ນາງຈຶ່ງຮ້ອງຂໍຊີວິດນຳທ້າວຂີ້ຄ້ານ ໂດຍຈະພາໃຫ້ຫາພໍ່ແມ່ ແລ້ວມອບແຫວນທຳມະໂລງໃຫ້. ເມື່ອທ້າວໄດ້ແຫວນມາແລ້ວ ກໍມາເສກແປງບ້ານເຮືອນງາມຢູ່. ຕໍ່ມາກໍໄດ້ມີພະຍາຊ້າງມາມອບງ່າໃຫ້ ແລ້ວງ່າຊ້າງກໍກາຍເກີດເປັນນາງງ່າທີ່ງົດງາມ ທັງສອງກໍຢູ່ກິນຮ່ວມກັນຢ່າງມີຄວາມສຸກ. ຕໍ່ມາແມ່ມົດຮູ້ຂ່າວກໍຢາກໄດ້ແຫວນທຳມະໂລງ ຈຶ່ງໄດ້ແປງກາຍເປັນຍິງຊະລາໄປລໍ້ເອົາແຫວນ. ເມື່ອໝາແມວຮູ້ວ່າ ແຫວນຖືກແມ່ມົດລັກໄປ ກໍອອກຕາມຫາຈົນໄດ້ແຫວນກັບຄືນມາ, ໃນເວລາເດີນທາງຂ້າມນໍ້າໝາກັບແມວຜິດກັນຈຶ່ງເຮັດໃຫ້

ແຫວນຕົກລົງນ້ຳ ເວລານັ້ນມີປາໄນໂຕໜຶ່ງລອຍມາເຫັນກໍກືນແຫວນລົງໄປໃນທ້ອງ ຈຶ່ງເຮັດໃຫ້ຕົນໂຕຂອງມັນເປັນສີເຫຼືອງຄືກັບຄຳ. ພໍໝາ ແລະ ແມວຫຼຽວເຫັນກໍເລີຍໂດດລົງຄຸບເອົາແລ້ວມາບີບທ້ອງຈົນແຫວນກະເດັນອອກມາ ແລ້ວກໍປ່ອຍລົງນ້ຳຄືເກົ່າ ແຕ່ສີຂອງປາກໍຍັງເປັນສີເຫຼືອງຢູ່ຈົນຮອດທຸກມື້ນີ້.

ຈາກເນື້ອໃນທີ່ຍົກມາຂ້າງເທິງໄດ້ສະແດງໃຫ້ເຫັນວ່າ ໄຕເມີ້ຍໄດ້ສັງເກດເຫັນປາທີ່ມີສີເຫຼືອງຄ້າຍຄືກັບຄຳຈຶ່ງອະທິບາຍວ່າ ປາເປັນສີເຫຼືອງແມ່ນມາຈາກການກືນກິນແຫວນທຳມະໂລງລົງໄປໃນທ້ອງ ຈຶ່ງເຮັດໃຫ້ປາເປັນສີເຫຼືອງຄືກັບຄຳ ເຊິ່ງເປັນການອະທິບາຍຕາມແນວຄວາມຄິດຂອງຊາວໄຕເມີ້ຍບູຮານ ເພື່ອໃຫ້ຊົນຮຸ່ນຫຼັງໄດ້ຮູ້ເຖິງປິດສະໜາດັ່ງກ່າວ.

**3) ຊື່ເອີ້ນນົກເຂົາຄໍລາຍ**

ນົກເຂົາເປັນນົກຊະນິດໜຶ່ງ ທີ່ມີລັກສະນະພິເສດຕ່າງຈາກນົກຊະນິດອື່ນຄື ຂົນຄໍຂອງນົກເຂົາແມ່ນເປັນຈຸດເປັນລາຍ ພ້ອມນັ້ນນົກເຂົາມັກຊອກກິນເຂົ້າໄຮ່ ເຂົ້ານາ ໃນຍາມເຂົ້າສຸກເຫຼືອງ ຕໍ່ກັບລັກສະນະພິເສດ ຂົນຄໍນົກເຂົາລາຍນັ້ນ, ຊາວໄຕເມີ້ຍໄດ້ພະຍາຍາມອະທິບາຍເຖິງທີ່ມາຂອງລັກສະນະດັ່ງກ່າວຕາມແນວຄິດດັ້ງເດີມຂອງຊາວໄຕເມີ້ຍ. ຈາກການສຶກສາບົດບາດໜ້າທີ່ນິທານໄຕເມີ້ຍໃນການອະທິບາຍເຫດກ່ຽວກັບສັດ ພົບນິທານອະທິບາຍຊື່ເອີ້ນນົກເຂົາຄໍລາຍ. ດັ່ງສະແດງອອກໃນນິທານ“ສອງອ້າຍນ້ອງ” ເລົ່າວ່າ ຍັງມີສອງອ້າຍນ້ອງທີ່ມີແມ່ເປັນນາງຟ້າຢູ່ເມືອງແຖນ ເມື່ອເຖິງເວລາຜູ້ເປັນແມ່ໄດ້ກັບເມືອເມືອງແຖນສອງອ້າຍນ້ອງໄດ້ພາກັນເດີນທາງໄປຈົນຮອດເມືອງແຖນ. ເມື່ອໄປຮອດເມືອແຖນ ພະຍາແຖນຮູ້ຂ່າວກໍຢາກລອງພິສູດວ່າ ເປັນຫຼານແລະລູກນາງຂອງລູກສາວຂອງຕົນແທ້ບໍ່ ຈຶ່ງໄດ້ເອົາໝາກປັດໃສ່ດົ້ງມາໃຫ້ເດັກນ້ອຍທັງສອງຄົນນັບ ແລ້ວກໍໃຫ້ຫ້ອຍເປັນສາຍ. ເວລານັ້ນນົກເຂົາສອງຜົວເມຍຫຼຽວເຫັນຈຶ່ງສົງສານ ແລ້ວກໍພາມາກັນນັບຊ່ວຍ. ນັບແລ້ວກໍຫ້ອຍເປັນພວງ ສວມໃສ່ຄໍພວກມັນຈົນເຕັມ ເຮັດໃຫ້ຄໍນົກເຂົາບ້ຽວ ແລະເປັນລາຍໝາກປັດເຕັມຢູ່ຄໍ. ແຕ່ນັ້ນມາ ນົກເຂົາຈຶ່ງຄໍບ້ຽວ,ຄໍລາຍ

ຈາກເນື້ອໃນຂາງເທິງ ໄດ້ສະແດງໃຫ້ເຫັນວ່າ ໄຕເມີ້ຍໄດ້ອະທິບາຍລັກສະນະພິເສດຂອງຂົນຄໍນົກເຂົາລາຍ ແລະສຽງຮ້ອງຂອງນົກເຂົາ ແມ່ນມາຈາກສາເຫດທີ່ນົກເຂົາໄປນັບໝາກປັດມາຮ້ອຍເປັນພວງແລ້ວເອົາມາຫ້ອຍໃສ່ຄໍຕົນເອງ. ເຫດຜົນດັ່ງກ່າວ ເປັນການອະທິບາຍລັກສະນະພິເສດຂອງນົກເຂົາຕາມທີ່ຊາວໄຕເມີ້ຍບູຮານສັງເກດເຫັນ.

**4) ຊື່ເອີ້ນແມງຂີ້ຄ້ານ**

ແມງຂີ້ຄ້ານແມ່ນແມງໄມ້ຊະນິດໜຶ່ງທີ່ມັກອາໄສຢູ່ນຳຂອນໄມ້ເວລາຖາງໄຮ່, ຈຸດພິເສດຂອງແມງໄມ້ຊະນິດນີ້ແມ່ນມັກລີ້ເຊື່ອງຢູ່ຕາມກີບເປືອກໄມ້ແຫ້ງ. ເວລາໄມ້ເໜັງມັນຈະແຂງຕົວເໝືອນກັບບໍ່ມີຊີວິດ. ຕໍ່ກັບລັກສະນະພິເສດແມງຂີ້ຄ້ານນັ້ນ, ຊາວໄຕເມີ້ຍໄດ້ພະຍາຍາມອະທິບາຍເຖິງທີ່ມາຂອງລັກສະນະດັ່ງກ່າວຕາມແນວຄິດດັ້ງເດີມຂອງຊາວໄຕເມີ້ຍ. ຈາກການສຶກສາບົດບາດໜ້າທີ່ນິທານໄຕເມີ້ຍໃນການອະທິບາຍເຫດກ່ຽວກັບສັດ ພົບນິທານອະທິບາຍຊື່ເອີ້ນຊື່ແມງຂີ້ຄ້ານດັ່ງສະແດງອອກໃນນິທານ “ກົນຂີ້ຈ້ານ”

ເລົ່າວ່າຍັງມີສອງແມ່ລູກພາກັນໄປໄປຖາງໄຮ່ປູກເຂົ້າຜູ້ລູກເປັນຜັດເປັນຄົນຂີ້ຄ້ານ ໄປຮອດໄຮ່ແລ້ວກໍນັ່ງໄຫ້ຕົວ່າເຈັບນັ້ນເຈັບນີ້ ຈົນແມ່ຖາງແລ້ວ, ພໍຮອດຍາມຈູດໄຮ່ກໍມີແຕ່ແມ່ເປັນຜູ້ຈູດສ່ວນທ້າວກໍນອນຢູ່ຖຽງ. ຫຼັງຈາກທີ່ຈູດໄຮ່ແລ້ວແມ່ກໍໃຫ້ຮ້າໄຮ່ຊ່ວຍ ເພາະແມ່ບໍ່ສາມາດແບກໄມ້ໜັກໄດ້ ທ້າວກໍຕອບວ່າຂີ້ຄ້ານຜູ້ເປັນຈຶ່ງຮ້າຍໃສ່ວ່າຖ້າຍັງຂີ້ຄ້ານແນວນີ້ຕາຍໄປກໍຈະເກີດເປັນແມງຂີ້ຄ້ານ. ຫຼັງຈາກທີ່ຮ້າໄຮ່ແລ້ວຜູ້ເປັນແມ່ກໍລົ້ມປ່ວຍຈົນເສຍຊີວິດຍັງເຫຼືອແຕ່ທ້າວກຳພອຍ ລາວບໍ່ຮູ້ຈະເຮັດແນວໃດຈຶ່ງໄປຮ້າໄຮ່ຕໍ່ ທັງແບກໄມ້ທັງໄຫ້ຍ້ອນຄວາມຂີ້ຄ້ານ ຈົນສຸດທ້າຍທ້າວກໍໄປນັ່ງເອື່ອຍຂອນໄມ້ແລ້ວກໍຂາດໃຈຕາຍຮ່າງກາຍຂອງທ້າວຈຶ່ງກາຍເປັນແມງຂີ້ຄ້ານ.

ຈາກເນື້ອເລື່ອງຂ້າງເທິງສະແດງໃຫ້ເຫັນວ່າ ຊື່ເອີ້ນແມງຂີ້ຄ້ານແມ່ນມາຈາກທ້າວຂີ້ຄ້ານບໍ່ຍອມເຮັດວຽກຊ່ວຍແມ່. ເມື່ອຕາຍໄປແລ້ວຮ່າງກາຍພາດຢູ່ຂອນໄມ້ກໍຈຶ່ງກາຍແມງຂີ້ຄ້ານທີ່ມັກອາໄສຢູ່ຕາມຂອນໄມ້ຕ່າງໆ. ເຫດຜົນດັ່ງກ່າວນັ້ນ ຊາວໄຕເມີ້ຍບູຮານອະທິບາຍໄປຕາມຄວາມຄິດຂອງເຂົາເຈົ້າ ເພື່ອຕອບຄຳຖາມເຖິງທີ່ມາຂອງແມງໄມ້ນັ້ນ.

**5) ຊື່ເອີ້ນບົ້ງເປ້ຫຼົວ**

ບົ້ງເປ້ຫຼົວແມ່ນບົ້ງຊະນິດໜຶ່ງທີ່ມີລັກສະນະພິເສດຫຼັງຂອງມັນຄ້າຍຄືກັບວ່າມັນກຳລັງເປ້ຟືນ. ຊາວໄຕເມີ້ຍໄດ້ໃສ່ຊື່ບົ້ງຊະນິດນັ້ນວ່າ “ບົ້ງເປ້ຫົວ” ຕໍ່ກັບຊື່ເອີ້ນລັກສະນະທີ່ພິເສດດັ່ງກ່າວ ຊາວໄຕເມີ້ຍຈຶ່ງໄດ້ອະທິບາຍເຖິງທີ່ມາເພື່ອໃຫ້ຫາຍຄວາມຂ້ອງຄາໃຈຕາມວິໄສທັດຂອງຊາວໄຕເມີ້ຍບູຮານ. ຈາກການສຶກສາບົດບາດໜ້າທີ່ນິທານໄຕເມີ້ຍໃນການອະທິບາຍເຫດກ່ຽວກັບສັດ ພົບນິທານອະທິບາຍຊື່ເອີ້ນຊື່ບົ້ງເປ້ຫຼົວ. ດັ່ງສະແດງອອກໃນນິທານ “ກົນຂີ້ລັກ”

ເລົ່າວ່າຍັງມີນາງແມ່ໝ້າຍຄົນໜຶ່ງເປັນຄົນຂີ້ລັກມັກຈົກເອົາເຄື່ອງຂອງຄົນອື່ນ ຖ້າຫາກເຫັນຫຍັງແລ້ວກໍລັກເອົາໄປເປັນຂອງຕົນເອງທັງໝົດ. ມີມື້ໜຶ່ງລາວໄດ້ໄປລັກເອົາຟືນຂອງໝໍເຊີຜູ້ໜຶ່ງ ທີ່ກຳລັງນອນພັກຜ່ອນຈາກການຕັດຟືນ. ນາງແມ່ໝ້າຍຄົນນັ້ນໄດ້ເກັບເອົາຟືນໃສ່ເຕັມເປ້ແລ້ວກໍຮີບຟ້າວໜີທັນທີ. ພໍໝໍເຊີຕື່ນຂຶ້ນມາບໍ່ເຫັນຟືນຈັກດຸ້ນຈຶ່ງໄດ້ປ້ອຍດ່າວ່າຖ້າໃຜລັກເອົາຟືນຂອງຕົນໄປ ເມື່ອຕາຍໄປແລ້ວຂໍໃຫ້ກາຍເປັນບົ້ງ ແລະ ມີເປ້ຟືນຕິດຢູ່ຫຼັງຕະຫຼອດເວລາເອົາອອກຈາກຫຼັງບໍ່ໄດ້. ເມື່ອນາງແມ່ ໝ້າຍຕາຍໄປແລ້ວກໍຈຶ່ງກາຍເປັນບົ້ງ ແລະ ມີເປ້ຟືນຕິດຢູ່ຫຼັງເອົາອອກບໍ່ໄດ້.

ຈາກເນື້ອໃນນິທານຂ້າງເທິງສະແດງໃຫ້ເຫັນວ່າວ່າ ຊື່ເອີ້ນບົ້ງເປ້ຫຼົວ ແມ່ນມາຈາກຄຳຊາບແສ້ງຂອງໝໍພອນ ແລະ ມາຈາກການທີ່ນາງແມ່ໝ້າຍໄປລັກເປ້ເອົາຟືນ. ການທີ່ຊາວໄຕເມີ້ຍອະທິບາຍລັກສະນະຊື່ເອີ້ນຂອງບົ້ງນັ້ນເປັນການໄຂຂໍ້ຂ້ອງໃຈເຖິງລັກສະນະພິເສດຂອງສັດຕາມແບບວິທີຄິດຂອງຊາວໄຕເມີ້ຍບູຮານ.

ຈາກການວິເຄາະບົດບາດໜ້າທີ່ນິທານພື້ນເມືອງໄຕເມີ້ຍໃນການອະທິບາຍຊື່ເອີ້ນສັດບາງຊະນິດມາຂ້າງເທິງ ເຊັ່ນ ຊື່ເອີ້ນປາປາກ, ຊື່ເອີ້ນປາໄນຄຳ, ຊື່ເອີ້ນນົກເຂົາຄໍລາຍ, ຊື່ເອີ້ນແມງຂີ້ຄ້ານ ແລະ ຊື່ເອີ້ນບົ້ງເປ້ຫຼົວ. ສະແດງໃຫ້ເຫັນເຖິງການໃຊ້ນິທານເປັນສື່ໃນການໄຂຂໍ້ປິດສະໜາຕາມແນວຄວາມຄິດຂອງຊາວບູຮານທີ່ພະຍາຍາມອະທິບາຍເພື່ອເປັນການຕອບຄຳຖາມຕໍ່ກັບຊື່ສັດບາງຊະນິດທີ່ເຫັນວ່າມີຊື່ກົງກັບລັກສະນະຄວາມເປັນຈິງຂອງສັດຊະນິດດັ່ງກ່າວນັ້ນ.

**3.2 ລັກສະນະສັດ**

ລັກສະນະພິເສດຂອງສັດບາງຊະນິດ ໝາຍເຖິງການໃຊ້ນິທານພື້ນເມືອງໄຕເມີ້ຍເພື່ອເປັນການໄຂຄວາມຂັບຄາ ຫາຄຳຕອບເພື່ອແກ້ປິດສະໜາເຖິງລັກສະນະ ແລະ ຈຸດພິເສດຂອງສັດທີ່ມີຄວາມແຕກຕ່າງດັ່ງລາຍລະອຽດລຸ່ມນີ້:

**1) ລັກສະນະຫົວແມງວັນແບ່ງເຄິ່ງ**

ຫົວແມງວັນແບ່ງເຄິ່ງແມ່ນຈຸດພິເສດ ຫຼື ລັກສະນະຂອງແມງວັນ. ແມງວັນແມ່ນສັດທີ່ມັກຕອມອາຫານຫວານ,ຄາວ ແລະບູດເນົ່າເຊິ່ງເຫັນໄດ້ງ່າຍ. ສັດຊະນິດນີ້ມີຫົວແບ່ງເຄິ່ງເປັນສອງສ່ວນເໝືອນກັບມີຮອຍຜ່າເຄິ່ງກາງ. ລັກສະນະດັ່ງກ່າວແມ່ນຄວາມແຕກຕ່າງຈາກສັດໂຕອື່ນ ຈຶ່ງເປັນທີ່ສົງໄສຂອງຄົນໄຕເມີ້ຍວ່າ ເປັນຫຍັງຫົວແມງວັນຫົວນ້ອຍໆຈຶ່ງແບ່ງເຄິ່ງຄືແນວນັ້ນ. ຈາກການສຶກສາບົດບາດ

ໜ້າທີ່ນິທານໄຕເມີ້ຍໃນການອະທິບາຍເຫດກ່ຽວກັບສັດພົບນິທານທີ່ອະທິບາຍຄວາມເປັນມາຂອງຫົວແມງວັນແບ່ງເຄິ່ງ ເລື່ອງ "ນາງກ່ຳ" ເລົ່າວ່າ ນາງກ່ຳ ຖືກພະອິນລັກໄປເປັນເມຍຢູ່ສະຫວັນ. ສ່ວນແມ່ນາງກ່ຳກໍຮ້ອງໄຫ້ຊອກຫາລູກ ເພື່ອໃຫ້ຮູ້ຂ່າວລູກ ຈຶ່ງໄດ້ໄປອ້ອນວອນງົວໃຫ້ໄປຫານາງກ່ຳ ເມື່ອງົວຂຶ້ນສະຫວັນກໍເຫັນຫຍ້າງາມກໍເລີຍບໍ່ໄປຮອດນາງກ່ຳ, ແລ້ວນາງໝ້າຍກໍໄປຂໍຮ້ອງຄວາຍ, ເປັດ ແຕ່ກໍບໍ່ເປັນຜົນ ຈຶ່ງໄດ້ໄປຂໍຮ້ອງແມງວັນ ເມື່ອແມງຂຶ້ນໄປເທິງສະຫວັນ ກໍໄດ້ເຫັນນາງກ່ຳຢູ່ກິນກັບລູກຊາຍຢ່າງສະໜຸກສຸກສະບາຍ ກໍລົງມາບອກນາງໝ້າຍ ວ່າ "ເຫັນນາງກ່ຳ ທັງງາມທັງເຫຼື້ອມກວ່ານາງໝາກສາຫ້ອຍຢູ່ບ້ານເມືອງເຮົານີ້ອີກ." ເວລານັ້ນນາງ ໝາກສາຫ້ອຍກາຍມາໄດ້ຍິນແມງວັນເວົ້າຂວັນ. ນາງຮູ້ສຶກຄຽດໃຫ້ແມງວັນ ທີ່ເວົ້າວ່າຕົນບໍ່ງາມສໍ່ານາງກ່ຳ. ນາງໝາກສາຫ້ອຍຈຶ່ງຈັບເອົາແມງວັນມາຜ່າຫົວອອກເປັນບົ້ງ; ຈຶ່ງເຮັດໃຫ້ຫົວແມງວັນມີຮອຍຄືຖືກຜ່າແຕ່ນັ້ນມາ.

ຈາກນິທານທີ່ຍົກມາຂ້າງເທິງສະແດງໃຫ້ເຫັນວ່າ ຊາວໄຕເມີ້ຍໄດ້ອະທິບາຍທີ່ມາຂອງຫົວແມງວັນແບ່ງເຄິ່ງວ່າເກີດມາຈາກນາງໝາກສາຫ້ອຍທີ່ເປັນຄົນເອົາພ້າມາຜ່າຫົວແມງວັນ ເພາະວ່າ ແມງວັນເວົ້າໃຫ້ນາງໝາກສາຫ້ອຍເປັນຄົນຂີ້ຮ້າຍ.

**2) ລັກສະນະໝູດັງເວີ້**

ໝູເປັນສັດຊະນິດໜຶ່ງທີ່ມີດັງເວີ້, ມັກໃຊ້ປາກດຸດດິນ, ກິນຮຳເປັນອາຫານ. ລັກສະນະ ແລະພຶດຕິກຳພິເສດຂອງໝູນັ້ນຊາວໄຕເມີ້ຍໄດ້ອະທິບາຍສາເຫດທີ່ເຮັດໃຫ້ດັງໝູມີລັກສະນະນີ້ ດັ່ງສະແດງອອກໃນນິທານເລື່ອງ "ພະຍາກະຕູ່".

ເລົ່າວ່າ ມີແມ່ໝ້າຍຄົນໜຶ່ງທີ່ຮ້າຍດ່າໃຫ້ແຖນຢູ່ເທິງຟ້າ ບໍ່ມາຊ່ວຍຕົນເຮັດໄຮ່ໄຖນາ ແລະ ຕຳເຂົ້າ ປະໃຫ້ຕົນຕຳເຂົ້າ ເອົາລູກຢູ່ຜູ້ດຽວ. ເມື່ອແຖນຢູ່ເທິງຟ້າໄດ້ຍິນກໍໂກດແຄ້ນ ຈຶ່ງເຮັດໃຫ້ເມືອງຟ້າ ແລະເມືອງມະນຸດຫ່າງກັນ ບໍ່ສາມາດຕິດຕໍ່ຫາກັນໄດ້ອີກ ແລ້ວກໍສັ່ງແຖນໝູມາບອກມະນຸດວ່າ ສາມມື້ໃຫ້ກິນເຂົ້າເທື່ອໜຶ່ງ, ແຖນໝູກໍເດີນທາງລົງມາໂລກມະນຸດ, ມາປ່າວປະກາດບອກມະນຸດຕາມທີ່ພະຍາແຖນບອກ ແຕ່ແຖນໝູລືມຄຳທີ່ພະຍາແຖນສັ່ງໄວ້ວ່າ "ໃຫ້ມະນຸດສາມມື້ກິນເຂົ້າເທື່ອໜຶ່ງ." ແຖນໝູເວົ້າກັບມະນຸດວ່າ "ມື້ໜຶ່ງກິນເຂົ້າສາມເທື່ອ." ພະຍາແຖນເກີດຄວາມໂມໂຫ ຈຶ່ງຕີປາກໝູ. ປາກໝູຈຶ່ງເວີ້ອອກ ແລະ ກໍບັງຄັບໃຫ້ໝູດຸດຂີ້, ດຸດບໍ່ໝົດແລ້ວກໍໃຫ້ກິນຂີ້ແທນເຂົ້າ ແລະໃຫ້ໝູລົງມາຢູ່ໂລກມະນຸດເປັນອາຫານມະນຸດ.

ຈາກເນື້ອໃນທີ່ຍົກມາຂ້າງເທິງ ໄດ້ສະແດງໃຫ້ເຫັນວ່າ ໄຕເມີ້ຍໄດ້ອະທິບາຍລັກສະນະພິເສດປາກໝູເວີ້ ແມ່ນຍ້ອນໝູບໍ່ຟັງຄຳສັ່ງຂອງພະຍາແຖນ ຈຶ່ງຖືກແຖນລົງໂທດດ້ວຍການເອົາມີຕີປາກໃຫ້ມີປາກເວີ້ອອກ.

**3) ລັກສະນະອອງເຕົ່າ**

ເຕົ່າ ແມ່ນສັດເຄິ່ງບົກເຄິ່ງນ້ຳຊະນິດໜຶ່ງເຊິ່ງມີລັກສະນະພິເສດຈາກສັດຊະນິດອື່ນຄື ອອງຂອງມັນ. ອອງເຕົ່າມີລັກສະນະເປັນເສັ້ນໆຕັດແບ່ງ ແລະ ເປັນສີດຳຄ້າຍຄືຕາກາໂລ່. ລັກສະນະດັ່ງກ່າວຊາວໄຕເມີ້ຍບູຮານໄດ້ອະທິບາຍຜ່ານນິທານໄຕເມີ້ຍ ຄື ນິທານເລື່ອງ "ທ້າວເຕົ່າ" ເລົ່າວ່າ

ທ້າວເຕົ່າເປັນສັດທີ່ສາມາດເວົ້າເໝືອນກັບຄົນ ທ້າວໄປຂໍໄປຢູ່ນຳຍ່າຈຳສອນ. ເມື່ອທ້າວໄປຢູ່ນຳຍາກໍໄດ້ປູກໝາກເຕົ້າໝາກແຕງຊ່ວຍຍ່າ ແລະ ນຳມາເຕົ້າໝາກແຕງໄປຂໍລູກສາວ ລູກສາວຫຼ້າພະຍາເມືອງ ເຊິ່ງມີພຽງນາງຫຼ້າເທົ່ານັ້ນທີ່ບໍ່ລັງກຽດທ້າວເຕົ່າທີ່ເປັນສັດ. ສ່ວນອີກຫົກຄົນລ້ວນແລ້ວແຕ່ລັງກຽດທ້າວເຕົ່າ. ແລ້ວທ້າວເຕົ່າກໍໄດ້ເອົານາງຫຼ້າໄປຢູ່ນຳ ຕໍ່ມາທ້າວອອກຈາກອອງເຕົ່າ ແລ້ວກາຍເປັນຊາຍຮູບຮ່າງງົດງາມ ແຕ່ຍ້ອນນາງຫຼ້າຢ້ານທ້າວກັບຄືນໄປຢູ່ໃນອອງເຕົ່າ ຈຶ່ງໄດ້ນຳເອົາອອງເຕົ່າໄປຖິ້ມລົງກອງໄຟ ແຕ່ທ້າວເຕົ່າເອົາອອກໄດ້ທັນ ຈຶ່ງເຮັດໃຫ້ອອງເຕົ່າເປັນສີດຳ ແລະ ລາຍຕັ້ງແຕ່ນັ້ນມາ.

ຈາກເນື້ອໃນທີ່ຍົກມາຂ້າງເທິງ ໄດ້ສະແດງໃຫ້ເຫັນວ່າ ອອງເຕົ່າມີລາຍກ່ານດຳກ່ານຂາວ ມາຈາກນາງຫຼ້າໂຍນເຕົ່າໃສ່ເຕົາໄຟ, ໄຟຈຶ່ງໄໝ້ອອງເຕົ່າເປັນລາຍດ່າງດຳ ເຊິ່ງກໍກົງກັບລັກສະນະຂອງອອງເຕົ່າທີ່ພົບເຫັນຕາມສະພາບຕົວຈິງ. ສິ່ງດັ່ງກ່າວເປັນການອະທິບາຍລັກສະນະອອງເຕົ່າ ແບບອັດຕະວິໄສຂອງຊາວໄຕເມີ້ຍຄົນບູຮານ.

**4) ລັກສະນະເສືອລາຍ**

ເສືອແມ່ນສັດປະເພດໜຶ່ງທີ່ກິນຊີ້ນເປັນອາຫານ, ມັກອາໄສຢູ່ໃນປ່າຕຶບດົງໜາ ແລະ ມັກທຳຮ້າຍສັດອື່ນໆ. ລັກສະນະພິເສດຂອງເສືອແມ່ນມີຂົນລາຍກ່ານດຳຕາມຕົນໂຕ. ຕໍ່ກັບລັກສະນະພິເສດຂອງຂົນເສືອທີ່ລາຍນັ້ນຊາວໄຕເມີ້ຍບູຮານໄດ້ພະຍາຍາມຫາຄຳຕອບເພື່ອໃຫ້ຫາຄວາມຂ້ອງຄາໃຈ ດັ່ງທີ່ສະແດງອອກໃນເລື່ອງ "ກະຕູ່ກັບເສືອ" ແລະ "ເລື່ອງພະຫຍາ" ດັ່ງນີ້

ເລົ່າວ່າ ເສືອອວດອ້າງວ່າຕົນເປັນເຈົ້າປ່າບໍ່ຢ້ານກົວໃຜ ມີມື້ໜຶ່ງມັນກັບກະຕູ່ (ຄັນຄາກ)ຜິດຖຽງກັນ ກະຕູ່ຈຶ່ງທ້າແຂ່ງຍົກຂອນໄມ້ເສືອຍົກກ່ອນກໍຂຶ້ນ ສ່ວນກະຕູ່ກໍໄປບ່ອນຂອນກິ່ງແລ້ວທຳທ່າຍົກວ່າຂຶ້ນເປັນອັນວ່າສະເໝີກັນ. ເສືອຈຶ່ງທ້າແຂ່ງວ່າໃຜກິນອາຫານດີກວ່າກັນ. ຮອດມື້ນັ້ນໝາຍເສືອກໍຈົກຄໍຮາກອອກມາແລ້ວບອກວ່າເປັນກະດູກຂອງສັດແຕ່ລະຊະນິດ. ກະຕູ່ກໍຈົກຄໍຮາກອອກແລ້ວບອກວ່າແມ່ນນໍແຮດ, ແກ້ວມໍລະກົດ ແລະ ແກ້ວຕາເສືອ. ພໍເສືອໄດ້ຍິນກໍຕົກໃຈແລ່ນໜີຕະເລີດເຂົ້າປ່າໄປ. ໃນນະນັ້ນຊາວບ້ານາຈູດໄຮ່ມັນແລ່ນຜ່າກອງໄຟຈຶ່ງເຮັດໃຫ້ຂົນມັນໄໝ້ເປັນລາຍດ່າງດຳຈົນເທົ້າທຸກມື້ນີ້.

ຈາກນິທານຂ້າງເທິງອະທິບາຍໃຫ້ເຫັນວ່າ ເສືອຫຼັງລາຍແມ່ນມາຈາກໄຟໄໝ້ ເວລາທີ່ເສືອແລ່ນໜີຕາຍ ເພາະຢ້ານຄັນຄາກຄຸບກິນ. ການທີ່ຊາວໄຕເມີ້ຍບູຮານອະທິບາຍລັກສະນະເຖິງລັກສະນະຂອງເສືອນັ້ນກໍສະແດງໃຫ້ເຫັນເຖິງວິທີຄິດເພື່ອຕອບສະໜອງຄວາມຢາກຮູ້ຢາກເຫັນຂອງຊາວໄຕເມີ້ຍບູຮານ.

ໃນເລື່ອງ "ພະຫຍາ" ເລົ່າວ່າ ຫຼັງຈາກທີ່ຊາວນາໃຊ້ຄວາຍເພື່ອໄຖນາແລ້ວຈຶ່ງໄດ້ມັດຄວາຍໄວ້ຮົ່ມໄມ້ແຄມປ່າ ເວລານັ້ນເສືອມາເຫັນຈຶ່ງໄດ້ເຂົ້າໄປເວົ້າເຢີ້ຍຄວາຍຜູ້ມີກຳລັງວັງຊາວ່າຍອມໃຫ້ມະນຸດຜູ້ນ້ອຍໆໃຊ້ແຮງໄດ້ແນວໃດຄວາຍຈຶ່ງຕອບວ່າມະນຸດນ້ອຍແຕ່ມີພະຫຍາຫຼາຍ ເສືອໄດ້ຍິນຄຳວ່າພະຫຍາກໍຢາກຮູ້ຄວາຍຈຶ່ງບອກໃຫ້ເສືອລໍຖ້າໃຫ້ຊາວນາມາ ຊາວນາບອກເສືອວ່າ ຖ້າຢາກຮູ້ວ່າພະຫຍາເປັນແນວໃດຕ້ອງໃຫ້ຕົນເອົາເຊືອກມັດເສືອໄວ້ເພາະຢ້ານເສືອຈະກິນຕົນ ແລະ ຄວາຍ ເສືອກໍຍິນຍອມໃຫ້ຊາວນາມັດ. ຫຼັງຈາກນັ້ນຊາວນາກໍເອົາເຊືອກມັນຕົນຕົວຂອງເສືອ, ເອົາເຟືອງແຫ້ງມາປົກຈົນທົ່ວຕົນໂຕຂອງເສືອ ແລ້ວກໍເອົາໄຟມາຈູດ ເສືອເຫັນແນວນັ້ນກໍຮ້ອງຕາຍຂຶ້ນມາກໆທັງເຈັບທັງຢ້ານ ຊາວນາຈຶ່ງເວົ້າວ່ານີ້ລະພະຫຍາ ເສືອພູດພາດໝົດແຮງເຊືອກຂາດອອກ ເສືອແລ່ນເຂົ້າໄປໃນປ່າຈົນບໍ່ກ້າຫຼຽວ ຫຼັງເສືອຖືກໄຟໄໝ້ເປັນກ່ານດຳແດງ ດັ່ງນັ້ນເສືອຈຶ່ງມີຫຼັງລາຍກ່ານສີນ້ຳຕາ ແລະ ສີດຳຈົນເທົ້າທຸກວັນນີ້.

ຈາກເນື້ອໃນເລື່ອງຂ້າງເທິງສະແດງໃຫ້ເຫັນວ່ານິທານໄຕເມີ້ຍໄດ້ຕອບຄຳຖາມຊາວບູຮານວ່າ ເສືອມີລາຍກ່ານດຳແດງ ແລະ ສີນ້ຳຕານແມ່ນມາຈາກໄຟທີ່ມະນຸດເຜົາ. ເຊິ່ງເປັນການອະທິບາຍຕາມຄວາມຄິດຂອງຊາວບູຮານ.

**5) ລັກສະນະນົກເຂົາຄໍບ້ຽວ**

ນົກເຂົາເປັນນົກຊະນິດໜຶ່ງ ທີ່ມີລັກສະນະພິເສດຕ່າງຈາກນົກຊະນິດອື່ນຄື ຂົນຄໍຂອງນົກເຂົາແມ່ນເປັນຈຸດເປັນລາຍ ພ້ອມນັ້ນນົກເຂົາມັກຊອກກິນເຂົ້າໄຮ່ ເຂົ້ານາ ໃນຍາມເຂົ້າສຸກເຫຼືອງ. ນອກຈາກນີ້

ນົກເຂົາມີສຽງຮ້ອງພິເສດຈາກນົກຊະນິດອື່ນເມື່ອເຮົາຕັ້ງໃຈຟັງຈະຍິນສຽງຮ້ອງຢ່າງຈະແຈ້ງວ່າ "ເຂົ້າກູ! ເຂົ້າກູ!" ຕໍ່ກັບລັກສະນະພິເສດຂອງສຽງນົກເຂົາຮ້ອງ ແລະ ຂົນຄໍນົກເຂົາລາຍນັ້ນ, ຊາວໄຕເມີ້ຍໄດ້ພະຍາຍາມອະທິບາຍເຖິງລັກສະນະພິເສດດັ່ງກ່າວ. ຜ່ານການສຶກສານິທານອັດສະຈັນໄຕເມີ້ຍພົບວ່າ ມີນິທານໄດ້ບອກຄວາມເປັນມານົກເຂົາຄໍລາຍ. ດັ່ງປາກົດນິທານ "ສອງອ້າຍນ້ອງ" ເລົ່າວ່າ:

ຍັງມີສອງອ້າຍນ້ອງກໍ່າພອຍພໍ່ແມ່ຕາຍພວກເຂົາອາໄສຢູ່ຕູບນ້ອຍແຄມບ້ານ ຈົນໃຫຍ່ເປັນບ່າວຂຶ້ນມາຈຶ່ງຢາກມີຄູ່ຄິງຄືຜູ້ອື່ນ ທັງສອງຈຶ່ງແຕ່ງຂັນໄຫວ້ວອນແຖນໃຫ້ປະທານຄູ່ຄອງລົງມາ ພະຍາແຖນຈຶ່ງໄດ້ເອີ້ນລູກສາວທັງເຈັດຄົນມາຫາ ເພື່ອລົງປັດກວາດເຮືອນຊານແຕ່ງຢູ່ຄົວກິນໃຫ້ທ້າວທັງສອງເມື່ອຍາມເຂົາໄປເຮັດໄຮ່ນາ. ພໍທັງສອງກັບມາກໍແປກປະຫຼາດໃຈຕໍ່ກັບເຫດການທີ່ເກີດຂຶ້ນຈຶ່ງໄດ້ຈອບສ່ອງເບິ່ງສູດທ້າຍຈຶ່ງຮູ້ວ່າເປັນນາກິນນາລີລົງມາແຕ່ງເມືອງແຖນ ທັງສອງອ້າຍນ້ອງໂຜ່ອອກມາຜູ້ເປັນອ້າຍກອດຫຸບໄດ້ນາງຮີ່ງ ສ່ວນຜູ້ເປັນນ້ອງໄດ້ນາງອອດ ແລ້ວເຂົາກໍຕົກລົງປົງໃຈຢູ່ກິນຮ່ວມກັນແບບຜົວເມຍ. ເວລາຜ່ານໄປພວກໄດ້ລູກຊາຍນ້ອຍຜູ້ລະຄົນ ສອງອ້າຍນ້ອງໄດ້ຄອບເມຍໄປຄ້າ ປະແຕ່ເມຍ ແລະ ລູກຢູ່ເຮືອນ. ເມື່ອໄດ້ໂອກາດນາງຮີ່ງກັບນາງອອດກໍພາກັນເອົາປີກ ແລະ ຫາງມາຕໍ່ໃສ່ແລ້ວກໍບິນເມືອເມືອງຟ້າ. ລູກນ້ອຍທັງສອງຈຶ່ງໄດ້ນຳແມ່ຂຶ້ນເມືອ ໂດຍໄດ້ຮັບການຊ່ວຍເຫຼືອຈາກນົກເຂົາ. ພໍໄປຮອດພະຍາແຖນຕໍ່ທົດສອບວ່າແມ່ນລູກສອງນາງແທ້ບໍ່ຈຶ່ງໄດ້ເອົາໝາກປັດມາໃຫ້ເດັກນ້ອຍທັງສອງນັບ ເວລານັ້ນນົກເຂົາສອງຜົວເມຍຫຼຽວເຫັນຈຶ່ງສົງສານ ແລ້ວກໍພາກັນມານັບຊ່ວຍ. ພະຍາແຖນເຫັນກໍໂກດເຄືອງຈຶ່ງເອົາພວງໝາກປັດຫ້ອຍຄໍພວກມັນຈົນເຕັມເຮັດໃຫ້ຄໍມັນບ້ຽວ ແລ້ວກໍເປັນລາຍໝາກປັດເຕັມຢູ່, ແຕ່ນັ້ນມານົກເຂົາຈຶ່ງຄໍບ້ຽວ, ຄໍລາຍ.

ຈາກເນື້ອໃນເລື່ອງທີ່ກ່າວມາຂ້າງເທິງ ໄດ້ສະແດງໃຫ້ເຫັນວ່າໄຕເມີ້ຍໄດ້ອະທິບາຍລັກສະນະພິເສດຂອງຂົນຄໍນົກເຂົາລາຍ ແມ່ນມາຈາກສາເຫດຄື ທີ່ນົກເຂົາມີຂົນຄໍລາຍ ມາຈາກໝາກປັດທີ່ນົກຮ້ອຍເປັນພວງແລ້ວເອົາມາຫ້ອຍໃສ່ຄໍ. ເຫດຜົນດັ່ງກ່າວເປັນການອະທິບາຍລັກສະນະພິເສດຂອງນົກເຂົາຕາມສິ່ງທີ່ຊາວໄຕເມີ້ຍບູຮານສັງເກດເຫັນ.

**3.3 ພຶດຕິກຳສັດ**

ການອະທິບາຍກ່ຽວກັບພຶດຕິກຳຂອງສັດບາງຊະນິດ ໝາຍເຖິງການໃຊ້ນິທານພື້ນເມືອງໄຕເມີ້ຍເພື່ອເປັນການໄຂຄວາມຂັບຄາ ຫາຄຳຕອບເພື່ອແກ້ປົດສະໜາເຖິງລັກສະນະຈຸດພິເສດ ແລະ ພຶດຕິກຳທີ່ສະແດງອອກຂອງສັດທີ່ມີຄວາມແຕກຕ່າງ ດັ່ງລາຍລະອຽດລຸ່ມນີ້:

**1) ພຶດຕິກຳໂຕເຫຼືອກກິນເລືອດ**

ເຫຼືອກແມ່ນສັດຊະນິດໜຶ່ງທີ່ຈັດຢູ່ໃນກຸ່ມແມງໄມ້. ລັກສະນະຈຸດພິເສດຂອງເຫຼືອກແມ່ນກິນເລືອດຄົນ, ສັດເປັນອາຫານ ຕໍ່ກັບລັກສະນະຂອງເລືອດທີ່ເປັນແນວນັ້ນ. ຊາວໄຕເມີ້ຍໄດ້ອະທິບາຍຕາມຄວາມຄິດແບບອັດຕະວິໄສທີ່ເຫັນຈາກສະພາບຕົວຈິງ. ຈາກການສຶກສານິທານໄຕເມີ້ຍພົບມີນິທານທີ່ອະທິບາຍໂຕເຫຼືອກກິນເລືອດ ຄື ນິທານເລື່ອງ "ປູ່ສັງກະສາຍ່າສັງກະສີ" ເລົ່າວ່າ

ພະຍາແຖນໄດ້ສົ່ງປູ່ສັງກະສາຍ່າສັງກະສີມານຳພາມະນຸດໃຫ້ຮູ້ຈັກກິນອາຫານສຸກ, ຮູ້ຈັກປັກຖັກແສ່ວ, ຮູ້ຈັກລະບຽບການດຳລົງຊີວິດໃນສັງຄົມ. ເມື່ອເຖິງເວລາທີ່ກຳນົດພະຍາແຖນກໍສົ່ງແຖນເສນາມານຳເອົາປູ່ສັງກະສາຍ່າສັງກະສີຄືນໄປເມືອງດັ່ງເກົ່າ ແຕ່ຍ້ອນປູ່ສັງກະສາຍ່າສັງກະສີລືມສອນວິທີໃຊ້ໄຟຈຶ່ງ ເຮັດໃຫ້ຄົນເມືອງລຸ່ມຂາດແຄນໄຟ. ມະນຸດທັງຫຼາຍຈຶ່ງໄປຂໍຄວາມຊ່ວຍເຫຼືອນຳໂຕເຫຼືອກສອງຜົວເມຍ ເພື່ອເອົາໄຟນຳພະຍາແຖນ. ເມື່ອໂຕເຫຼືອກສອງຜົວເມຍສາມາດນຳໄຟມາໃຫ້ມະນຸດໄດ້ ມະນຸດທັງຫຼາຍກໍໄດ້ຍອມປະຕິບັດຕາມຄຳຂໍຂອງໂຕເຫຼືອກ ຄື ຍອມໃຫ້ໂຕເຫຼືອກດູດກິນເລືອດກິນງົວ, ເລືອດຄວາຍ, ພ້ອມທັງເລືອດຂອງຕົນເອງ ແຕ່ນັ້ນມາຈົນເທົ້າທຸກວັນນີ້.

ຈາກເນື້ອໃນມາຂ້າງເທິງ ສະແດງໃຫ້ເຫັນວ່າ ໂຕເຫຼືອກໄດ້ກິນເລືອດຄົນ, ສັດ ເພາະການທວງຖາມຄ່າຕອບແທນທີ່ໂຕເຫຼືອກສາມາດໄປນຳໄຟຈາກເມືອງແຖນມາໃຫ້ມະນຸດ. ມະນຸດບໍ່ມີທາງເລືອກຈຶ່ງຍອມໂຕເຫຼືອກກິນເລືອດຕົນ ແລະສັດເພື່ອແລກກັບໄຟ. ສິ່ງດັ່ງກ່າວຄືການອະທິບາຍຕໍ່ລັກສະນະໂຕເຫຼືອກກິນເລືອດຂອງຄົນບູຮານ.

**2) ພຶດຕິກຳລີງລົງນ້ຳບໍ່ໄດ້**

ລີງ ແມ່ນສັດຊະນິດໜຶ່ງທີ່ອາໄສຢູ່ເທິງບົກ ບໍ່ສາມາດລົງຢູ່ນ້ຳໄດ້ເປັນເວລາດົນ. ຕໍ່ກັບພຶດຕິກຳດັ່ງກ່າວຂອງລີງຊາວໄຕເມີ້ຍໄດ້ພະຍາຍາມອະທິບາຍເຖິງສາເຫດ. ຜ່ານການຄົ້ນຄວ້ານິທານໄຕເມີ້ຍພົບນິທານທີ່ອະທິບາຍພຶດຕິກຳລີງລົງນ້ຳບໍ່ໄດ້ໃນນິທານເລື່ອງ "ແຂ້ກັບລີງ" ເລົ່າວ່າ

ແຕ່ກີ້ແຕ່ກ່ອນສັດບົກ ແລະ ສັດນ້ຳຢາກອາໄສຢູ່ບ່ອນໃດກໍໄດ້ໃນພື້ນນ້ຳມີແຂ້ສອງຜົວເມຍຜູ້ເປັນເມຍເປັນໄຂ້ໜັກ ຈຶ່ງໄດ້ໄປຂໍຢາດີວິເສດນຳພະຍາປາຝາໄລ ໂດຍການໃຫ້ປົດສະໜາ ແຂ້ສອງຜົວເມຍຕີໂຈດບໍ່ອອກເລີຍຄິດວ່າແມ່ນຫົວໃຈ ຈຶ່ງໄດ້ໄປຕົວະໃຫ້ລີງລົງມາໃນນ້ຳພໍລີງຮູ້ວ່າແມ່ນແຂ້ຈະເອົາຫົວໃຈ ກໍເກີດມີການຜິດຖຽງກັນຢ່າງໜັກໜ່ວງ ເມື່ອເຫັນແນວນັ້ນພະຍາເສືອຜູ້ເປັນເຈົ້າແຫ່ງສັດບົກ  ແລະ ພະຍາຍາຝາໄລຜູ້ເປັນເຈົ້ານ້ຳຈຶ່ງສັ່ງຫ້າມບໍ່ໃຫ້ລີງລົງຢູ່ນ້ຳໃຫ້ຢູ່ແຕ່ໜ້າດິນ ແລະ ເທິງຕົ້ນໄມ້ເທົ່ານັ້ນ. ສ່ວນແຂ້ກໍບໍ່ໃຫ້ຂຶ້ນນອນເທິງຕົ້ນໄມ້, ໃຫ້ຢູ່ແຕ່ໜ້າດິນບາງຄັ້ງຄາວ ແລະ ນອນໃນນ້ຳ ແຕ່ມື້ນັ້ນເປັນຕົ້ນມາຈົນເທົ້າທຸກວັນນີ້.

ຈາກເນື້ອໃນເລື່ອງຂ້າງເທິງສະແດງໃຫ້ເຫັນເຖິງການໃຊ້ນິທານເພື່ອອະທິບາຍເຫດທີ່ຂັບຂ້ອງໃຈກ່ຽວກັບພຶດຕິກຳຂອງລີງທີ່ນອນໃນນ້ຳບໍ່ໄດ້ ເຊິ່ງເປັນແນວຄິດແບບຊາວບູຮານພື້ນເມືອງຂອງຊາວໄຕເມີ້ຍ.

**3) ພຶດຕິກຳສຽງຮ້ອງກົບ**

ກົບແມ່ນສັດເຄິ່ງບົກເຄິ່ງນ້ຳຊະນິດໜຶ່ງ ທີ່ມີລັກສະນະພິເສດ ແລະ ພຶດຕິກຳຄື ເວລາຝົນຕົກຈະສົ່ງສຽງຮ້ອງດັງ ອຶບ! ອຶບ! ອອກມາດັງສະໜັ່ນຕາມຫ້ວຍຮ່ອງຄອງບຶງຕ່າງໆ. ຕໍ່ກັບພຶດຕິກຳດັ່ງກ່າວນີ້ຊາວໄຕເມີ້ຍໄດ້ພະຍາຍາມອະທິບາຍຕາມວິໄສທັດຂອງຊາວໄຕເມີ້ຍບູຮານ. ຜ່ານການສຶກສາບົດບາດນິທານພົບນິທານທີ່ອະທິບາຍກ່ຽວກັບສຽງຮ້ອງກົບພົບໃນເລື່ອງ "ບໍ່ຟັງຄວາມ" ເລົ່າວ່າ

ຍັງມີກົບນ້ອຍໂຕໜຶ່ງບໍ່ມັກຟັງ ຄວາມເວລາທີ່ພໍ່ແມ່ສັ່ງວຽກແມ່ນມັກເຮັດກົງກັນຂ້າມ ເຊັ່ນ ແມ່ຫ້າມບໍ່ໃຫ້ໄປແມ່ນຈະໄປ ຫ້າມບໍ່ໃຫ້ກິນແມ່ນຍິ່ງກິນ. ເມື່ອອາຍຸສັງຂານຂອງຜູ້ເປັນແມ່ໃກ້ຈະໝົດຈຶ່ງຂໍສັ່ງຄວາມນຳລູກເປັນເທື່ອສຸດທ້າຍວ່າ "ຫາກແມ່ຕາຍໄປແລ້ວໃຫ້ເອົາສົບແມ່ໄປຝັງໄວ້ຢູ່ແຄມແມ່ນ້ຳເດີ" ສາເຫດທີ່ສັ່ງແບບນັ້ນຍ້ອນວ່າຮູ້ດີວ່າລູກຈະປະຕິບັດກົງກັນຂ້າມຕ້ອງເອົາຂຶ້ນຝັງໄວ້ເທິງພູແນ່ນອນ. ພໍແມ່ຕາຍໄປແລ້ວກົບນ້ອຍກໍຄິດໄດ້ວ່າຜ່ານມາຕົນບໍ່ຟັງຄວາມແມ່ເທື່ອນີ້ເປັນຄຳສັ່ງສຸດທ້າຍຂອງແມ່ຈຶ່ງຈະຂໍປະຕິບັດຕາມ ເລີຍເອົາສົບແມ່ໄປຝັງໄວ້ແຄມແມ່ນ້ຳ. ເມື່ອເວລາຟ້າຮ້ອງ ຟ້າມືດ ແລະ ມີຝົນຕົກມັນຈຶ່ງຮ້ອງເນືອງນັນສະໜັ່ນສຽງຮ້ອງກົບດັງອຶບໆ ໃນຍາມຝົນຕົກແມ່ນຍ້ອນເປັນຫ່ວງຢ້ານບ່ອນຝັງສົບຂອງແມ່ກົບຖືກນ້ຳຖ້ວມ.

ຈາກເນື້ອໃນຂ້າງເທິງເຫັນໄດ້ວ່າ ນິທານໄດ້ເຮັດໜ້າທີ່ເປັນສື່ເພື່ອໄຂຂໍ້ຂ້ອງໃຈຕໍ່ກັບພຶດຕິກຳຂອງກົບມັກຮ້ອງໃນຍາມຝົນຕົກ ວ່າມັນມີຄວາມເປັນຫ່ວງເປັນໃຍຕໍ່ສົບແມ່ທີ່ຝັງໄວ້ຢູ່ໃກ້ກັບແມ່ນ້ຳເພາະວ່າຢ້ານນ້ຳຖ້ວມ. ການອະທິບາຍລັກສະນະນີ້ກໍເປັນແນວຄວາມຄິດຕາມແບບບູຮານທີ່ຊາວໄຕເມີ້ຍສັງເກດເຫັນພຶດຕິກຳກົບ.

**4) ພຶດຕິກຳສຽງຮ້ອງນົກເຂົາ**

ນົກເຂົາເປັນນົກຊະນິດໜຶ່ງ ທີ່ມີລັກສະນະພິເສດຕ່າງຈາກນົກຊະນິດອື່ນຄື ຂົນຄໍຂອງນົກເຂົາແມ່ນເປັນຈຸດເປັນລາຍ ພ້ອມນັ້ນນົກເຂົາມັກຊອກກິນເຂົ້າໄຮ່ ເຂົ້ານາ ໃນຍາມເຂົ້າສຸກເຫຼືອງ. ນອກຈາກນີ້ນົກເຂົາມີສຽງຮ້ອງພິເສດຈາກນົກຊະນິດອື່ນເມື່ອເຮົາຕັ້ງໃຈຟັງຈະຍິນສຽງຮ້ອງຢ່າງຈະແຈ້ງວ່າ "ເຂົ້າກູ! ເຂົ້າກູ!" ຕໍ່ກັບລັກສະນະພິເສດຂອງສຽງນົກເຂົາ ຊາວໄຕເມີ້ຍໄດ້ພະຍາຍາມອະທິບາຍເຖິງລັກສະນະພິເສດດັ່ງກ່າວ. ຜ່ານການສຶກສານິທານອັດສະຈັນໄຕເມີ້ຍພົບວ່າ ມີນິທານໄດ້ສຽງຮ້ອງ "ເຂົ້າກູ! ເຂົ້າກູ" ມາຈາກນິທານເລື່ອງ "ເຂົ້າ" ເລົ່າໄວ້ວ່າ:

ໂລກມະນຸດກັບເມືອງແຖນຢູ່ໃກ້ກັນ ເວລານັ້ນມະນຸດຍັງບໍ່ທັນມີເຂົ້າ ແລະ ບໍ່ຮູ້ກິນເຂົ້າ ນົກເຂົາທີ່ອາໄສຢູ່ເມືອງແຖນໄດ້ໄປເຝົ້າໄຮ່ນຳພະຍາແຖນຈຶ່ງໄດ້ລັກເອົາແນວເຂົ້າມາໃຫ້ມະນຸດຢູ່ເມືອງລຸ່ມ ເພື່ອເປັນການຕອບແທນບຸນຄຸນມະນຸດໄດ້ປັນເອົາເຂົ້າໃຫ້ນົກເຂົາກິນແຕ່ມັນກໍຍັງບໍ່ພໍໃຈ ໃນເວລາທີ່ປະຊາຊົນເຮັດໄຮ່ນັ້ນນົກເຂົາທັງຫຼາຍກໍມາທວງກິນເຂົ້ານຳຊາວບ້ານ. ພວກມັນວ່າ ເປັນຍ້ອນພວກມັນຄາບມາ ມະນຸດຈຶ່ງມີແນວເຂົ້າຮອດຊຸ່ມື້ນີ້. ມະນຸດກໍບໍ່ມີໃຜຂຶນຄວາມນົກເຂົາ. ເຂົາເຈົ້າໄດ້ປັນເຂົ້າໃຫ້ນົກເຂົາກິນເພື່ອເປັນການຕອບແທນບຸນຄຸນ ແຕ່ນົກເຂົາຜັດໂລບມາກໂລພາ ໄດ້ກິນສ່ຳໃດກໍບໍ່ພໍ ເຫັນໜ້າມະນຸດຍາມໃດ ນົກເຂົາກໍທ້ວງກໍຖາມວ່າ "ເຂົ້າກູ! ເຂົ້າກູ! ເຂົ້າກູ!" ຈົນກາຍມາເປັນສຽງຮ້ອງຂອງນົກເຂົານັບແຕ່ນັ້ນເປັນເປັນມາ.

ຈາກເນື້ອໃນເລື່ອງທີ່ກ່າວມາຂ້າງເທິງນັ້ນໄດ້ສະແດງໃຫ້ເຫັນວ່າ ໄຕເມີ້ຍໄດ້ອະທິບາຍລັກສະນະພິເສດ ສ່ວນຮ້ອງສຽງເຂົ້າກູ!ເຂົ້າກູແມ່ນມາຈາກສຽງທ້ວງທວງເຂົ້າທີ່ນຳມາຈາກເມືອງແຖນຄືນ. ເຫດຜົນດັ່ງກ່າວເປັນການອະທິບາຍລັກສະນະພິເສດຂອງນົກເຂົາຕາມສິ່ງທີ່ຊາວໄຕເມີ້ຍບູຮານສັງເກດເຫັນ. ນອກຈາກນີ້ຂໍ້ຄວາມຂອງນິທານຍັງສະແດງໃຫ້ເຫັນວ່າຊາວໄຕເມີ້ຍເຄີຍທຳມາຫາກິນດ້ວຍການເຮັດໄຮ່ປູກເຂົ້າມາແຕ່ສະໄໝບູຮານ.

**5) ພຶດຕິກຳສຽງຮ້ອງນົກກູ້ຫູກ**

ນົກກູ້ຫູກແມ່ນນົກຊະນິດໜຶ່ງທີ່ມີລັກສະນະພິເສດຈາກສຽງຮ້ອງແຕກຕ່າງນົກຊະນິດອື່ນ ເວລາມັນຮ້ອງຈະອອກສຽງ ກູ້ຫູກ! ກູ້ຫູກ!. ຕໍ່ກັບຈຸດພິເສດຂອງສຽງຮ້ອງນີ້ ພາໃຫ້ຊາວໄຕເມີ້ຍບູຮານເກີດຂໍ້ສົງໄສຈຶ່ງໄດ້ພະຍາຍາມອະທິບາຍ. ດັ່ງສະແດງອອກໃນນິທານເລື່ອງ "ແມ່ຍ່າກິນປີງປີ້ງ" ເລົ່າວ່າ

ເຫິງນານມາແລ້ວຍັງມີລູກໃພ້ ແລະແມ່ຍ່າຕາບອດຄູ່ໜຶ່ງອາໄສຢູ່ນຳກັນຜູ້ເປັນລູກຊາຍໄດ້ອອກໄປຄ້າຂາຍຕ່າງເມືອງລູກໃພ້ເກີດຄວາມເບື່ອໜ່າຍທັງຊັງແມ່ຍ່າທີ່ສຸດຫາອັນປຽບບໍ່ໄດ້ ແຕ່ລະມື້ລູກໃພ້ໄດ້ປີ້ງເອົາປີງມາໃຫ້ແມ່ຍ່າກິນ ສ່ວນຕົນເອງ ແລະ ລູກແມ່ນກິນປີ້ງປາພໍອມ່ຍ່າຮູ້ຈຶ່ງໄດ້ຈອງກຳໝາຍເວນວ່າຖ້າຕາຍໄປໃຜຍົກສົບກໍບໍ່ໃຫ້ຂຶ້ນນອກເໜືອຈາກລູກໃພ້ ເມື່ອແມ່ຍ່າໄປກໍເປັນແບບນັ້ນແທ້ ຜູ້ທີ່ເປ້ສົບແມ່ນລູກໃພ້ ຮອດກອງຟອນກໍບໍ່ສາມາດແກະອອກໄດ້ດວງວິຍານແມ່ຍ່າຈຶ່ງໄດ້ດຶງເອົາລູກໃພ້ເຂົ້ານຳ ກ່ອນຈະສິ້ນໃຈກ່ອນຈິສິ້ນໃຈ ຍັງເປັນຫ່ວງເປັນໃຍນຳຫູກຂອງຕົນທີ່ຕ່ຳຍັງບໍ່ແລ້ວ ບວກກັບບາບກຳທີ່ຕົນໄດ້ສ້າງໄວ້ກັບແມ່ຍ່ານັ້ນເຮັດໃຫ້ນາງລູກໃພ້ກາຍເປັນນົກ ຍ້ອນວ່າເປັນຫ່ວງຫູກທີ່ບໍ່ທັນກູ້ ຍາມໃດນົກນາງລູກໃພ້ກໍຈະຮ້ອງວ່າ ກູ້ຫູກ! ກູ້ຫູກ! ກູ້ຫູກ! ແຕ່ນັ້ນເປັນຕົ້ນມາ.

ຈາກເນື້ອໃນເລື່ອງຂ້າງເທິງສະແດງໃຫ້ເຫັນເຖິງບົດບາດໜ້າທີ່ນິທານໃນການອະທິບາຍເຖິງລັກສະນະພິເສດຂອງນົກທີ່ມີສຽງຮ້ອງ ກູ້ຫູກ! ກູ້ຫູກ! ກູ້ຫູກ! ວ່າວມາຈາກຄວາມເປັນຫ່ວງເປັນໃຍນຳຫູກທີ່ຕ່ຳບໍ່ທັນສຸດ ແລະ ຍັງສ່ອງໃຫ້ເຫັນເຖິງບາບກຳທີ່ກະທຳຕໍ່ຜູ້ມີພະຄຸນຈົນກາຍເປັນນົກ. ເຊິ່ງເປັນຕາມອະທິບາຍຕາມວິໄສທັດຂອງຊາວໄຕເມີ້ຍບູຮານ.

ຜ່ານການວິເຄາະບົດບາດໜ້າທີ່ນິທານໃນການອະທິບາຍກ່ຽວກັບສັດມາຂ້າງເທິງເຫັນໄດ້ວ່າ ນິທານເຮັດໜ້າທີ່ເພື່ອໄຂຂໍ້ຂ້ອງໃຈກ່ຽວກັບຊື່ເອີ້ນ, ລັກສະນະຈຸດພິເສດ ແລະ ພຶດຕິກຳຂອງສັດບາງຊະນິດທີ່ມີຄວາມແຕກຕ່າງຈາກສັດຊະນິດອື່ນ. ໃນການໄຂປິດສະໜາຄຳຕອບກໍມີລັກສະນະແບບຄວາມຄິດ, ວິໄສທັດຂອງຊາວໄຕເມີ້ຍບູຮານທີ່ເລົ່າສືບຕໍ່ກັນມາ.

## 4. ວິພາກຜົນ

ນິທານພື້ນເມືອງໄຕເມີ້ຍທີ່ ອະທິບາຍທີ່ມາຂອງຊື່ສັດບາງຊະນິດຕາມລັກຊະຂອງມັນເຊັ່ນ ຊື່ເອີ້ນປາປາກ, ປາໄນຄຳ, ນົກເຂົາຄໍລາຍ; ລັກສະນະຫົວແມງວັນແບ່ງເຄິ່ງ, ໝູດັງເວີ້, ອອງເຕົ່າ, ເສືອລາຍ, ຄວາຍບໍ່ມີແຂ້ວເບື້ອງເທິງ, ນົກເຂົາຄໍບ້ຽວ, ບົ້ງເປ້ຟືນ, ແມງຂີ້ຄ້ານ, ກຸ້ງຫຼັງກົ່ງ ແລະ ການກຳເນີດລີງ. ພ້ອມກັນນັ້ນ, ນິທານໄຕເມີ້ຍ ຍັງມີການອະທິບາຍພຶດຕິກຳຂອງສັດປະກອບມີ ສຽງຮ້ອງຂອງກົບ, ສຽງຮ້ອງນົກກູ້ຫູກ, ໂຕເຫຼືອກກິນເລືອດ, ແຂ້ອ້າປາກ, ລີງລົງນ້ຳບໍ່ໄດ້, ເປັດກິນຮຳ, ໝູກິນຂີ້, ໝາບໍ່ກິນຈູ່ຈີ່, ປາອາໄສຢູ່ນ້ຳ, ເຕົ່າຢູ່ໃນນ້ຳ ແລະ ບົກໄດ້, ແຂ້ປີນຕົ້ນໄມ້ບໍ່ໄດ້, ເສືອຢ້ານຄັນຄາກ, ແມວກັບໝາບໍ່ຖືກກັນ, ແມງໝີນກັບນົກຈິບບໍ່ຖືກກັນ, ກະຮອກກະແຕບໍ່ລົງນ້ຳ. ເຊິ່ງບັນດານິທານເຫຼົ່ານີ້ມີບົດບາດ ຕໍ່ສັງຄົມຊາວໄຕເມີ້ຍ ຢ່າງຫຼວງຫຼາຍເນື່ອງຈາກວ່າ ຊາວໄຕເມີ້ຍນຳໃຊ້ນິທານສັດເປັນເລື່ອງເລົ່າ ເພື່ອສັ່ງສອນພຶດຕິກຳຕ່າງໆຂອງຄົນໃນສັງຄົມ ທັງສ່ອງແສງໃຫ້ເຫັນເຖິງຄວາມສຳພັນຂອງສັງຄົມ ແລະທຳມະຊາດທີ່ມີສ່ວນພົວພັນກັນ. ສະນັ້ນໃນທິດສະດີກ່ຽວກັບບົດບາດໜ້າທີ່ນິທານໃນການອະທິບາຍກ່ຽວກັບສັດສອດຄ່ອງກັບແນວຄິດສະດີຂອງ William (1965) ທີ່ກ່າວເຖິງບົດບາດໜ້າທີ່ຂອງຄະຕິຊົນວ່າຄະຕິຊົນເປັນທາງອອກສຳລັບຄວາມຂັດແຍ້ງ ແລະ ກົດເກນທາງສັງຄົມ, ຄະຕິຊົນໃຫ້ການສຶກສາອົບຮົມລະບຽບຂອງສັງຄົມ, ຄະຕິຊົນກັບການຖ່າຍທອດຄວາມເຊື່ອ ແລະ ພິທີກຳ ແລະ ຄະຕິຊົນກັບການສ້າງເອກະລັກ ແລະ ປະຫວັດສາດທ້ອງຖິ່ນເຊິ່ງໃນນັ້ນໄດ້ກ່າວອ້າງການບົດບາດໜ້າທີ່ໃນການອະທິບາຍກ່ຽວກັບສັບພະສິ່ງຕ່າງໆທີ່ເກີດຂຶ້ນຢູ່ໃນສັງຄົມເຊິ່ງລວມມີການອະທິບາຍກ່ຽວກັບສັດ ແລະ ຍັງສອດຄ່ອງກັບ NaThalang (2004) ໄດ້ສະເໜີບົດບາດໜ້າທີ່ຂອງຄະຕິຊົນເປັນ 3 ປະການໃຫຍ່ ເຊິ່ງປະກອບມີ ບົດບາດຄະຕິຊົນໃນການອະທິບາຍກຳເນີດກ່ຽວກັບສັບພະສິ່ງຕ່າງໆ ເຊິ່ງລວມມີຄົນສັດ, ພືດ ແລະ ເຄື່ອງໃຊ້ສອຍຕ່າງໆ ລ້ວນແລ້ວແຕ່ມາຈາກມູນເຫດ ເຊິ່ງຍົກໃຫ້ເຫັນການອະທິບາຍສັດຜ່ານນິທານເພື່ອສ່ອງແສງບົດບາດທາງສັງຄົມ, ບົດບາດຄະຕິຊົນໃນການໃຫ້ການສຶກສາອົບຮົມລະບຽບສັງຄົມ ແລະ ຮັກສາມາດຖານພຶດຕິກຳທາງສັງຄົມ ແລະ ບົດບາດຄະຕິຊົນໃນການເປັນທາງອອກໃຫ້ກັບຄັບຂ້ອງໃຈຂອງບຸກຄົນອັນເກີດຈາກກົດເກນທາງສັງຄົມ; ຍັງສອດຄ່ອງກັບບົດຄົ້ນຄວ້າ Sangkhaphanthanon (2009) ໄດ້ສຶກສາບົດບາດໜ້າທີ່ຂອງນິທານພື້ນເມືອງລາວຂອງ 3 ກຸ່ມຊົນເຜົ່າທີ່ໃຊ້ພາສາຕ່າງຕະກູນກັນ ຄື ລາວ, ກະຕູ ແລະ ມົ້ງ ໂດຍໃຊ້ບົດນິທານທີ່ໄດ້ຮວບຮວມໄວ້ເປັນລາຍລັກອັກສອນເປັນຂໍ້ມູນໃນການສຶກສາ. ຜົນການສຶກສາພົບວ່າ ນິທານພື້ນເມືອງລາວທັງສາມກຸ່ມຄື ຊົນເຜົ່າລາວ, ກະຕູ ແລະ ມົ້ງ ມີບົດບາດໜ້າທີ 5 ດ້ານ ໄດ້ແກ່ ບົດບາດໜ້າທີໃນການອະທິບາຍເຫດກຳເນີດຂອງກຸ່ມຊົນ ແລະ ປະຫວັດສາດທ້ອງຖິ່ນ, ການໃຫ້ການສຶກສາອົບຮົມລະບຽບຂອງສັງຄົມ, ການເປັນທາງອອກໃຫ້ກັບຄວາມຄັບຂ້ອງໃຈຂອງບຸກຄົນອັນເກີດຈາກຄວາມຂັດແຍ້ງ ແລະ ກົດເກນທາງສັງຄົມ, ການຖ່າຍທອດຄວາມເຊື່ອປະເພນີ ແລະ ພິທີກຳ, ບົດບາດໜ້າທີໃນການສ້າງ ແລະ ສະແດງອັດຕະລັກທາງເຜົ່າພັນ.

ນອກນີ້ຍັງສອດຄ່ອງກັບບົດຄົ້ນຄວາມຂອງ Hongsuwan (2007); Nonsuwan and Hongsuwan (2011) ສຶກສາບົດບາດຂອງໝາໃນຕຳນານ ແລະ ພິທີກຳຂອງຊາດພັນຕ່າງໆ ໃນອຸສາຄະເນ ພົບວ່າ ໝາໃນຕຳນານ ແລະ ພິທີກຳມີບົດບາດສຳຄັນ 4 ປະການ ຄື ໝາເປັນບັນພະບຸລຸດຂອງມະນຸດ, ເປັນຜູ້ນຳທາງວັດທະນະທຳ, ເປັນຕົວແທນຂອງການສືບເຜົ່າພັນ ແລະ ຄວາມອຸດົມສົມບູນ, ເປັນສື່ກາງເຊື່ອມຍົງລະຫວ່າງໂລກມະນຸດກັບຖຸທກາສັກສິດ. ແຕ່ເມື່ອມາສົມທຽບກັບບົດຄວາມສະບັບນີ້ແມ່ນເນັ້ນໜັກລົງເລິກຄົ້ນຄວ້າກ່ຽວກັບການອະທິບາຍກ່ຽວກັບສັດເຊິ່ງປະກອບດ້ວຍການອະທິບາຍຊື່ເອີ້ນ, ລັກສະນະ ແລະ ພຶດຕິກຳຂອງສັດບາງຊະນິດທີ່ມີເອກະລັກແຕກຕ່າງບໍ່ຄືໝູ່. ໃນຜົນການຄົ້ນຄວ້ານີ້ສ່ອງແສງໃຫ້ເຫັນເຖິງອະອະທິບາຍສັດເພື່ອສ່ອງແສງບົດບາດໜ້າທີ່ທາງສັງຄົມ ຄືຫາກປະພຶດຜິດຫຼັກທຳມະຈະລິຍາມີການຂີ້ຕວົະ, ຫຼອກລວງ ຫຼື ກະທຳສິ່ງໃດໜຶ່ງເກີນເຫດກໍຈະສົ່ງຜົນສະທ້ອນຕໍ່ບຸກຄົນນັ້ນໆ ເໝືອນດັ່ງນັດທີ່ໄດ້ຮັບຜົນກຳຈາກການປະພຶດໃນນິທານ.

## 5. ສະຫຼຸບ

ນິທານໄຕເມີ້ຍເປັນສ່ວນໜຶ່ງຂອງມໍລະດົກທາງວັດທະນະທຳຂອງຊາວໄຕເມີ້ຍບູຮານ ທີ່ໄດ້ສືບທອດຜ່ານການເລົ່າ ແລະ ການບັນທຶກຕໍ່ໆກັນມາ. ໜຶ່ງໃນບົດບາດສຳຄັນຂອງນິທານໄຕເມີ້ຍແມ່ນການອະທິບາຍ ຫຼື ໄຂປິດສະໜາຄຳຖາມຂອງຊາວບູຮານກ່ຽວກັບປະສົບການ ແລະ ສິ່ງເຫັນຕ່າງໆໃນຊີວິດປະຈຳວັນ. ໃນນິທານໄຕເມີ້ຍ ມັກຈະມີການອະທິບາຍສິ່ງແປກປະຫຼາດຂອງສັດຕ່າງໆທີ່ຜູ້ຄົນສົງໄສ ແລະ ພະຍາຍາມຫາຄຳຕອບ ດ້ວຍການໃຊ້ຈິນຕະນາການ ແລະ ຄວາມເຊື່ອແບບບູຮານ. ຕົວຢ່າງທີ່ພົບໃນນິທານໄຕເມີ້ຍ ມີການອະທິບາຍຊື່ຂອງສັດຕ່າງໆທີ່ມີທັງຄວາມເປັນເອກະລັກ ແລະ ສະທ້ອນໃຫ້ເຫັນວິທີຄິດຂອງຊາວບູຮານ. ຕົວຢ່າງ ເຊັ່ນ ຊື່ເອີ້ນປາປາກ ທີ່ອາດມີທີ່ມາຈາກຮູບຮ່າງປາທີ່ປາກໃຫຍ່ ຫຼື ຊື່ເອີ້ນນົກເຂົາຄຳລາຍ ທີ່ເປັນການອະທິບາຍຕາມລັກສະນະພາຍນອກຂອງສັດເຊິ່ງແຕກຕ່າງຈາກສັດອື່ນ. ນອກຈາກນັ້ນ ຍັງມີການອະທິບາຍລັກສະນະພິເສດຂອງສັດຕ່າງໆ ຢ່າງເຊັ່ນ ຫົວແມງສັນແບ່ງເຄິ່ງ, ຂາຂອງກຸ້ງທີ່ງໍ່ຕົງດັ່ງກົ່ງ, ຫຼື ເຫັນຄວາຍທີ່ບໍ່ມີແຂ້ວເທິງ. ຄວາມແປກຫຼາຍເຫຼົ່ານີ້ໄດ້ກາຍເປັນແຮງບັນດານໃຫ້ຄົນບູຮານສ້າງນິທານຂຶ້ນມາເພື່ອໄຂຄວາມສົນໃຈ ແລະ ອະທິບາຍຫາກົກເຫດໃນແນວທີ່ຕົນເອງເຂົ້າໃຈໄດ້ງ່າຍ. ບົດບາດຂອງນິທານຍັງສະທ້ອນໄປເຖິງຄວາມເຊື່ອ ແລະ ວິໄສທັດຂອງຊາວໄຕເມີ້ຍບູຮານກ່ຽວກັບຄວາມເປັນໄປຂອງໂລກ ແລະ ສັດທັງຫຼາຍ ເຊັ່ນ ການອະທິບາຍວ່າເປັດຈຶ່ງກິນຫອຍ ຫຼື ແຂ້ປີນຕົ້ນໄມ້ບໍ່ໄດ້. ນິທານໄຕເມີ້ຍຈຶ່ງບໍ່ແມ່ນແຕ່ພຽງຄວາມບັນເທີງ ແຕ່ຍັງເປັນອີກຮູບແບບໜຶ່ງຂອງການຮຽນຮູ້ ແລະ ການອະທິບາຍໂລກຕາມວິທີຄິດຂອງຊາວບູຮານ. ການຄົ້ນຄວ້າກ່ຽວກັບນິທານໄຕເມີ້ຍບໍ່ພຽງແຕ່ໃຫ້ຄວາມມ່ວນຊື່ນເພີດເພີນ ແລະ ອະທິບາຍກ່ຽວກັບສັດແຕ່ຍັງທະທ້ອນພາບສະທ້ອນຄຸນຄ່າສັງຄົມ ແລະ ການປະຕິສຳພັນລະຫວ່າງມະນຸດກັບທຳມະຊາດ ເຊັ່ນ ການໃຫ້ຊື່ ແລະ ອະທິບາຍລັກສະນະສັດ (ເຊັ່ນ ປາໄນຄຳ, ແມງຂີ້ຄ້ານ, ກຸ້ງຫຼັງກົ່ງ) ສະທ້ອນໃຫ້ເຫັນການສັງເກດທຳມະຊາດຢ່າງລະອຽດຂອງຄົນບູຮານ, ການອະທິບາຍພຶດຕິກຳຂອງສັດຫຼາຍໆຢ່າງ (ເຊັ່ນ ເສືອຢ້ານຄັນຄາກ, ຫມາບໍ່ກິນຈຸດຈີ່, ແຂ້ປີນຕົ້ນໄມ້ບໍ່ໄດ້) ແມ່ນການສື່ສານພາຍໃນທັດສະນະຂອງຄົນໃນຕຳນານ ທີ່ເໝືອນກັບວ່າພະຍາຍາມເຮັດໃຫ້ສັດມີ "ຄວາມເປັນຄົນ" ປະສົມຢູ່. ນອກຈາກນັ້ນ ນິທານໄຕເມີ້ຍຍັງສະທ້ອນໃຫ້ເຫັນເຖິງຄວາມພະຍາຍາມຂອງຄົນບູຮານໃນການເຂົ້າໃຈ ແລະ ອະທິບາຍສິ່ງຕ່າງໆຮອບໂລກໂດຍຜ່ານຈິນຕະນາການ ແລະ ຄວາມເຊື່ອ. ເປັນສື່ທີ່ສະທ້ອນເຫັນເຖິງວັດທະນະທຳ, ຄວາມຄິດ ແລະ ອົງຄວາມຮູ້ຂອງຄົນໃນອະດີດ. ການຄົ້ນຄວ້າຄັ້ງນີ້ຍັງພົບເຫັນຫຼາຍດ້ານທີ່ຄວນໄດ້ຮັບການສຶກສາຄົ້ນຄວ້າຕໍ່. ສະນັ້ນຜູ້ຄົ້ນຄວ້າຈຶ່ງສະເໜີແນະນຳສຳລັບການສຶກສາຕໍ່ ຄື ເນັ້ນຄວາມສຳຄັນຂອງການສືບທອດນິທານເພື່ອຮັກສາວັດທະນະທຳ ແລະ ເປັນແຫຼ່ງຂໍ້ມູນສຳລັບການຄົ້ນຄວ້າພາສາສາດ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 8. ເອກະສານອ້າງອີງ


Hongsuwan, P. (2007). *An analysis of the legend of the solar eclipse and lunar eclipse of the Thai people* [ Master thesis], Chulalongkorn University, 389

Malinowski, B. (1954). *Myth in Primitive Psychology Magic*, Science and Religion. New York: Doubleday Anchor Books, pp. 95-148.

NaThalang, S. (2000). *The study of local literature and society*. ThaiInstitute of Case Studies, Chulalongkorn University.

NaThalang, S. (2004). *Locally, there are stories and plays to study folklore in the context of Thai society*. Bangkok: Matichon, 321

Nonsuwan, A., & Hongsuwan, P. (2011). The Identity of the Hero in Lao Myths, *Journal of Mekong Societies* 7 (2), 109-128

Sangkhaphanthanon, L. (2009). *The role and function of Lao folk tales* [Doctoral Thesis], Naresuan University.

Soutthixay,S. (2020). *Tai Meuy Amazing Stories* [Master Thesis], Faculty of Letters, National University of Lao, 2-3

Soutthixay,S. (2019). *Literature and Culture of the Tay Meo people of Ban Phon Si, Kham Ket District, Bolikhamxay Province*, Faculty of Letters, National University of Lao, 14-15

Thompson. S. (1953). *Four Symposia on Folklore*. Indiana University Press.

Syvongsak, S., Sysouphanh,S., Nimnuan, L.,&Sonethala, A. (2021). LiteratureTastes in Daoneua's "Pharyouxivid" Novel. *Souphanouvong University Journal Multidisciplinary Research and Development, 7*(1), 102–113. Retrieved from

http://www.su-journal.com/index.php/su/article/view/102

Thongsonsai, T., & Khana. (2001). *Literature perspectives 1*. Department of Lao Language and Mass Communication, Faculty of Humanities, National University. 121

Vivlavong, S. (1996). *The benefits of literature 1*. Phai Nam Printing House,367

Vongdala, B., & Teagle. (1987). Laos Literature, Social Science Research Institute. 19-20

William, B.C .(1965). *"Four Functions of Folklore"* [Unpublished doctoral thesis] The Study of Folklore. Ed. by Alan Dundes. New Jersey: Prentice - Hall. pp. 279-298.

Wannaudorn, S., Boodphuang , C., Phengphanya, P. ., & Sathamma, P. . (2024). The Worldviews of Tai Lue in Ban Nayang Tai Nambak District, Luang Prabang Province, Laos: Perspectives from Tales, Legends, and Narrative Stories , *Mekong-Salween Civilization Studies Journal*, *15*(2), 55–80. retrieved from https://so04.tci-thaijo.org/index.php/jnuks/article/view/274576